# ບົດລາຍງານສະຖິຕິການທ່ອງທ່ຽວ ຂອງ ສປປ ລາວ

# 2024

LAOS
*Simply Beautiful*





ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

ກົມພັດທະນາການທ່ອງທ່ຽວ

ພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ

# ບົດນຳ

ກົມພັດທະນາການທ່ອງທ່ຽວ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໄດ້ປະສານສົມທົບກັບພະແນກວັດທະນະທຳ ແລະ ການທ່ອງທ່ຽວ ບັນດາແຂວງທົ່ວປະເທດ ເກັບກຳຂໍ້ມູນ ແລະ ພິມເຜີຍແຜ່ບົດລາຍງານສະຖິຕິການທ່ອງທ່ຽວຂອງ ສປປ ລາວ ໃນທຸກໆປີ. ສະຖິຕິການທ່ອງທ່ຽວ ປະກອບມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ, ລາຍຈ່າຍຂອງນັກທ່ອງທ່ຽວ, ໄລຍະການພັກເຊົາຂອງນັກທ່ອງທ່ຽວ, ສະຖິຕິການພັກແຮມ ແລະ ອື່ນໆ.

ຂໍ້ມູນສະຖິຕິການທ່ອງທ່ຽວປີ 2024 ສະບັບນີ້ຈະເປັນຂໍ້ມູນພື້ນຖານໃຫ້ພາກສ່ວນທີ່ກ່ຽວຂ້ອງ ນຳໄປສືບຕໍ່ຄົ້ນຄວ້າ ແລະ ສຶກສາຂໍ້ມູນດ້ານການທ່ອງທ່ຽວ ແລະ ຂໍ້ມູນທີ່ກ່ຽວຂ້ອງ ເນື່ອງຈາກວ່າຂະແໜງການທ່ອງທ່ຽວເປັນຂະແໜງເສດຖະກິດ ທີ່ຕິດພັນກັບຫຼາຍຂະແໜງການ ຂອງ ສປປ ລາວ.

ກົມພັດທະນາການທ່ອງທ່ຽວ ຂໍສະແດງຄວາມຂອບໃຈມາຍັງພະແນກວັດທະນະທຳ ແລະ ການທ່ອງທ່ຽວ ບັນດາແຂວງທົ່ວປະເທດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ທີ່ສະໜອງຂໍ້ມູນປະກອບເຂົ້າໃນປື້ມສະຖິຕິການທ່ອງທ່ຽວສະບັບນີ້ ເຊັ່ນ: ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ນະຄອນຫຼວງ ແລະ ບັນດາແຂວງ, ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ , ບັນດາບໍລິສັດທ່ອງທ່ຽວ, ໂຮງແຮມ ແລະ ທຸລະກິດທີ່ປິ່ນອ້ອມໃນຂະແໜງການທ່ອງທ່ຽວ ທີ່ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການສຳຫຼວດ ແລະ ເກັບຂໍ້ມູນສະຖິຕິການທ່ອງທ່ຽວມາໂດຍຕະຫຼອດ.

ຂ້າພະເຈົ້າຕາງໜ້າໃຫ້ ກົມພັດທະນາການທ່ອງທ່ຽວ, ຫວັງຢ່າງຍິ່ງວ່າບົດລາຍງານສະຖິຕິການທ່ອງທ່ຽວ ປະຈຳປີ 2024 ຢູ່ ສປປ ລາວ ສະບັບນີ້ ຈະເປັນປະໂຫຍດໃຫ້ ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າກົມ**

ພອນມະລີ ອິນທະພົມ

# ສາລະບານ

ບົດນຳ ........ i

ພາກສະເໜີ........ 1

ພາກທີ I: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2024........ 5

ສະຫຼຸບໂດຍຫຍໍ້........ 5

ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວຕ່າງປະເທດ ........ 5

ຕາຕະລາງທີ 1: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ ແລະ ອັດຕາເພີ່ມສະເລ່ຍແຕ່ປີ 1990-2024 ........ 7

ຕາຕະລາງທີ 2: ສົມທຽບລາຍຮັບຈາກການທ່ອງທ່ຽວ ກັບມູນຄ່າການສົ່ງອອກ ແຕ່ປີ 2019-2024 ........ 8

ເສັ້ນສະແດງທີ 1: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວຕ່າງປະເທດ ແລະ ລາຍຮັບຈາກການທ່ອງທ່ຽວ........ 8

ເສັ້ນສະແດງທີ 2: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ປີ 2012-2024 ........ 9

ເສັ້ນສະແດງທີ 3: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະເດືອນ ໃນປີ 2019-2024........ 9

ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວແຕ່ລະພາກພື້ນ ........ 10

ເສັ້ນສະແດງທີ 4: ນັກທ່ອງທ່ຽວພາກພື້ນ ໃນປີ 2024 ........ 10

ຕາຕະລາງທີ 3: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2024 ........ 11

ຕາຕະລາງທີ 4: ອັດຕາສ່ວນແບ່ງຕະຫຼາດຂອງນັກທ່ອງທ່ຽວແຕ່ລະພາກພື້ນ (%) 2017-2024........ 11

ຕາຕະລາງທີ 5: ອັດຕາເພີ່ມຂຶ້ນ ໃນແຕ່ລະປີ (%)........ 11

ການເດີນທາງເຂົ້າມາຂອງນັກທ່ອງທ່ຽວ........ 12

ຕາຕະລາງທີ 6: ຈຳນວນນັກທ່ອງທ່ຽວຕາມແຕ່ລະປະເພດ ປີ 2024........ 13

ຕາຕະລາງທີ 7: ລາຍຮັບຈາກການທ່ອງທ່ຽວຕ່າງປະເທດໃນປີ 2024 ........ 13

ຕາຕະລາງທີ 8: ລັກສະນະເດີນທາງຂອງນັກທ່ອງທ່ຽວຕ່າງປະເທດ ແລະ ຈຸດປະສົງຂອງການທ່ອງທ່ຽວ ແຕ່ປີ 2018-2024 ........ 14

ນັກທ່ອງທ່ຽວຈາກຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ........ 14

ຕາຕະລາງທີ 9: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແບ່ງຕາມແຕ່ລະສັນຊາດ (ອັດຕາເພີ່ມຂຶ້ນເປັນເປີເຊັນ) ແຕ່ປີ 2019-2024 ........ 17

ຕາຕະລາງທີ 10: ນັກທ່ອງທ່ຽວແບ່ງຕາມແຕ່ລະສັນຊາດ (ອັດຕາສ່ວນແບ່ງຕະຫຼາດ) ແຕ່ປີ 2019-2024........ 18

ຕາຕະລາງທີ 11: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແຕ່ລະເດືອນ ໃນປີ 2024........ 19

ຕາຕະລາງທີ 12: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ເປັນໄຕມາດ ແຕ່ປີ 2016-2024........ 20

ຕາຕະລາງທີ 13: ປະເພດນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ໃນແຕ່ລະເດືອນ 2019-2024........ 20

ເສັ້ນສະແດງທີ 5: 10ອັນດັບຂອງນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ປີ 2024 ........ 21

ເສັ້ນສະແດງທີ 6: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະໄຕມາດ ໃນປີ 2024 ........ 21

ຊ່ອງທາງການເດີນທາງ ເຂົ້າ-ອອກ ຂອງນັກທ່ອງທ່ຽວ ........ 22

ຕາຕະລາງທີ 14: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມດ່ານ ແຕ່ປີ 2019-2024 ..... 23
ຕາຕະລາງທີ 15: ນັກທ່ອງທ່ຽວທີ່ຜ່ານດ່ານສາກົນເຂົ້າ–ອອກເມືອງ ແຍກຕາມສັນຊາດ ໃນປີ 2024 ..... 24
ຕາຕະລາງທີ 16: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມໃນແຕ່ລະແຂວງ ແຕ່ປີ 2017-2024 ..... 25
ຄົນລາວທີ່ເດີນທາງໄປຕ່າງປະເທດ ..... 25
ຕາຕະລາງທີ 17: ຄົນລາວໃນແຕ່ລະແຂວງທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2017-2024 ..... 26
ຕາຕະລາງທີ 18: ຈຸດປະສົງຂອງຄົນລາວທີ່ເດີນທາງໄປຕ່າງປະເທດ ແຕ່ປີ 2020-2024 ..... 27
ສະພາບການທ່ອງທ່ຽວພາຍໃນປີ 2024 ..... 28
ຕາຕະລາງທີ 20: ນັກທ່ອງທ່ຽວພາຍໃນ ແຕ່ປີ 2017-2024 ..... 30
ເສັ້ນສະແດງທີ 7: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ປີ 2016-2024 ..... 30
ຕາຕະລາງທີ 21: ນັກທ່ອງທ່ຽວພາຍໃນທີ່ເຂົ້າມາຢ້ຽມຢາມແຂວງ ແຕ່ລະເດືອນ ໃນປີ 2024 ..... 31
ເສັ້ນສະແດງທີ 8: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະເດືອນ ໃນປີ 2024 ..... 32
ເສັ້ນສະແດງທີ 9: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະໄຕມາດ ໃນປີ 2024 ..... 32
ເສັ້ນສະແດງທີ 10: ຈຳນວນນັກທ່ອງທ່ຽວພາຍໃນ ແຕ່ລະແຂວງໃນປີ 2024 ..... 33
ຕາຕະລາງທີ 22: ລາຍຮັບຈາກການທ່ອງທ່ຽວພາຍໃນ ປີ 2024 ..... 33
ເສັ້ນສະແດງທີ 11: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວພາຍໃນ ແລະ ລາຍຮັບຈາກການທ່ອງທ່ຽວ ..... 34
ການສະໜອງການບໍລິການດ້ານການທ່ອງທ່ຽວ ..... 34
ຕາຕະລາງທີ 23: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ພັດຕະຄານ, ສວນອາຫານ, ຮ້ານອາຫານ, ຮ້ານຄາລະໂອເກະ ແລະ ຮ້ານບັນເທີງ ໃນປີ 2024 ..... 36
ຕາຕະລາງທີ 24: ຈຳນວນສະຖານທີ່ພັກແຮມ ແລະ ຫ້ອງນອນ ແຕ່ປີ 2019-2024 ..... 36
ຕາຕະລາງທີ 25: ຈຳນວນໂຮງແຮມ, ເຮືອນພັກ, ຣີສອດ, ຫ້ອງນອນ ແລະ ຕຽງ ໃນປີ 2024 ..... 37
ຕາຕະລາງທີ 26: ອັດຕາການພັກແຮມຢູ່ແຕ່ລະແຂວງ ແຕ່ປີ 2016-2024 ..... 37
ຕາຕະລາງທີ 27: ຈຳນວນແຫຼ່ງທ່ອງທ່ຽວຢູ່ ສປປ ລາວ ໃນປີ 2024 ..... 38
ຕາຕະລາງທີ 28: ຈຳນວນເຮືອນພັກປະຊາຊົນ ຢູ່ ສປປ ລາວ ໃນປີ 2024 ..... 38
ຕາຕະລາງທີ 29: ຈຳນວນບໍລິສັດທ່ອງທ່ຽວລາວ ແຕ່ປີ 2019-2024 ..... 39
ພາກທີ II: ການສຳຫຼວດນັກທ່ອງທ່ຽວ ໃນປີ 2024 ..... 40
ການສຳຫຼວດນັກທ່ອງທ່ຽວຕ່າງປະເທດ ..... 40
ຕາຕະລາງທີ 30: ລັກສະນະຂອງນັກທ່ອງທ່ຽວຕ່າງປະເທດທີ່ມາທ່ອງທ່ຽວ ແຕ່ປີ 2019-2024 ..... 42
ພາກທີ III: ການຄາດຄະເນສະຖິຕິການທ່ອງທ່ຽວ. ..... 45
ຕາຕະລາງທີ 31: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດ, ລາຍຮັບຈາກການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ, ແຕ່ປີ 2025-2026 ..... 46
ຕາຕະລາງທີ 32: ຄາດຄະເນຈຳນວນນັກທ່ອງທ່ຽວຕ່າງປະເທດໃນແຕ່ລະເດືອນ ແຕ່ປີ 2025-2026 ..... 47

ຕາຕະລາງທີ 33: ການຄາດຄະເນຈຳນວນນັກທ່ອງທ່ຽວພາຍໃນ, ລາຍຮັບຈາກການທ່ອງທ່ຽວ ແລະ ສະເລ່ຍໄລຍະພັກເຊົາ ແຕ່ປີ 2025-2026......48

## ພາກສະເໜີ

ໃນພາກສ່ວນນີ້ເປັນການອະທິບາຍເຖິງຄວາມໝາຍຂອງຂໍ້ມູນທີ່ໄດ້ມີການເກັບກຳໃນບົດລາຍງານ ເພື່ອໃຫ້ມີຄວາມເຂົ້າໃຈແກ່ຜູ້ນຳໃຊ້ ລວມເຖິງວິທີການເກັບຂໍ້ມູນ ແລະ ແຫຼ່ງທີ່ມາຂອງຂໍ້ມູນທີ່ຢູ່ໃນບົດລາຍງານສະບັບນີ້.

## ປະເພດຂອງນັກທ່ອງທ່ຽວຕ່າງປະເທດ

ປະເພດຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາລາວຈັດອອກເປັນ 2 ປະເພດ ເຊັ່ນ : ນັກທ່ອງທ່ຽວສາກົນ ແລະ ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ.

☐ ນັກທ່ອງທ່ຽວສາກົນແມ່ນນັກທ່ອງທ່ຽວທີ່ເຂົ້າມາລາວ ໂດຍມີໜັງສືຜ່ານແດນ ແລະ ຂໍເອົາວີຊາຢູ່ສະຖານທູດລາວ ຫຼື ສະຖານກົງສູນລາວ ຫຼື ເອົາວີຊາຢູ່ກັບດ່ານສາກົນ.

☐ ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ ແມ່ນນັກທ່ອງທ່ຽວມາຈາກບັນດາປະເທດໃກ້ຄຽງ ທີ່ມີຊາຍແດນຕິດຈອດກັບ ສປປ ລາວ ເຊັ່ນ: ໄທ, ຈີນ, ຫວຽດນາມ, ກຳປູເຈຍ ແລະ ມຽນມາ. ນັກທ່ອງທ່ຽວຈາກປະເທດເຫຼົ່ານີ້ ເຂົ້າມາ ສປປ ລາວ ໂດຍການໃຊ້ໃບຜ່ານແດນ.

ນັກທ່ອງທ່ຽວລາຍວັນ / ບໍ່ຄ້າງຄືນ (Same day visitor / Day Tripper / Excursionist) ໝາຍເຖິງ: ນັກທ່ອງທ່ຽວທີ່ມາທ່ຽວພາຍໃນວັນດຽວ ຄືມາຕອນເຊົ້າແລ້ວກັບຕອນແລງ ຫລື ມາຢ້ຽມຢາມໜ້ອຍກວ່າ24 ຊົ່ວໂມງ.

ແຕ່ປີ 1991 ເຖິງ 2002 ມີນັກທ່ອງທ່ຽວປະເພດໜຶ່ງຊຶ່ງເອີ້ນວ່າ "ນັກທ່ອງທ່ຽວຕໍ່ວີຊາ" ຊຶ່ງແມ່ນຜູ້ເຮັດວຽກຢູ່ປະເທດໃກ້ຄຽງ. ໃນທຸກໆ 3 ເດືອນ ຈະຕ້ອງໄດ້ເຂົ້າມາ ສປປ ລາວ ເພື່ອຂໍເອົາວີຊາໃໝ່ເພື່ອສາມາດເຂົ້າໄປໃນຍັງປະເທດໃກ້ຄຽງໄດ້ອີກ, ສ່ວນໃຫຍ່ແມ່ນນັກທ່ອງທ່ຽວຈາກປະເທດອິນເດຍ, ປາກິດສະຖານ, ສີລັງກາ, ເນປານ ແລະ ບັງກາລາເດດ. ນັບຕັ້ງແຕ່ປີ 2003 ເປັນຕົ້ນມາປະເພດນັກທ່ອງທ່ຽວດັ່ງກ່າວ ໄດ້ຈັດເຂົ້າໃນປະເພດ "ນັກທ່ອງທ່ຽວສາກົນ".

## ແຫຼ່ງຂໍ້ມູນ

☐ ສຳລັບຂໍ້ມູນສະຖິຕິນັກທ່ອງທ່ຽວ ພາກພື້ນ ແລະ ສາກົນ ແມ່ນໄດ້ມາຈາກບັດເຂົ້າ-ອອກເມືອງ ຈາກກົມຕຳຫຼວດກວດຄົນ ເຂົ້າ-ອອກເມືອງ, ພະແນກວັດທະນະທຳ ແລະ ການທ່ອງທ່ຽວ ນະຄອນຫຼວງ ແລະ ບັນດາແຂວງທົ່ວປະເທດ ເຊັ່ນ: ສັນຊາດ, ເພດ, ໜັງສືຜ່ານແດນ, ໄລຍະພັກເຊົາ, ດ່ານເຂົ້າ-ອອກເມືອງ ແລະ ບ່ອນພັກເຊົາ.

ນັບແຕ່ປີ 1995 ເປັນຕົ້ນມາຂໍ້ມູນນັກທ່ອງທ່ຽວພາກພື້ນ ແລະ ສາກົນໄດ້ເກັບກຳມາຈາກບັດເຂົ້າ-ອອກເມືອງຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ.

☐ ຂໍ້ມູນນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ ໄດ້ມາຈາກຕາຕະລາງບັນທຶກຄົນ ຄົນເຂົ້າ-ອອກເມືອງ ຂອງດ່ານສາກົນກວດຄົນເຂົ້າ-ອອກເມືອງ ທົ່ວປະເທດ.

☐ ຂໍ້ມູນກ່ຽວກັບລັກສະນະຂອງນັກທ່ອງທ່ຽວ, ໄລຍະພັກເຊົາ ແລະ ລາຍຈ່າຍຕໍ່ມື້ຕໍ່ຄົນ ແມ່ນໄດ້ມາຈາກຜົນຂອງການສຳຫຼວດນັກທ່ອງທ່ຽວ ທີ່ເຂົ້າມາຢ້ຽມຢາມ ສປປ ລາວ.

## ດ່ານສາກົນທີ່ນັກທ່ອງທ່ຽວເຂົ້າ-ອອກ ສປປ ລາວ.

### ສະໜາມບິນສາກົນ :

- ☐ **ສະໜາມບິນສາກົນວັດໄຕ** ມີຫຼາຍສາຍການບິນສາກົນທີ່ເປີດບໍລິການບິນໄປບິນມາສະໜາມບິນນີ້ ເຊິ່ງມີ 12 ສາຍ ການບິນເຊັ່ນ: Thai AirAsia, Lucky Air, Sishuan Airline, Vietnam Airline, Lao Airline State Enterprise, Thai Smile Airways, Jeju Air, China Eastern Airlines, China Express Airlines, Scoot Tiger Air, China Southern Airlines from Vientiane to Bangkok, Hanoi, Chongqing, Hochiminh, Kunming, Phanom Penh, Incheon-South-S, Korea, Shangi-Singapore and GuangZhou.
- ☐ **ສະໜາມບິນສາກົນຫຼວງພະບາງ** ແມ່ນເປັນດ່ານເຂົ້າ-ອອກເມືອງສາກົນອີກແຫ່ງໜຶ່ງຂອງ ສປປ ລາວ, ປະຈຸບັນມີສາຍການບິນເຊັ່ນ: Lao Airline, Bangkok Airways, Thai AirAsia, Vietnam Airline, Lucky Air, China Eastern Airlines and Charter Flight
- ☐ **ສະໜາມບິນສາກົນສະຫວັນນະເຂດ** ແມ່ນເປັນສະໜາມສາກົນອີກແຫ່ງໜຶ່ງ ມີການບິນລະຫວ່າງປະເທດ ໂດຍແມ່ນສາຍການບິນລາວ (ປະຈຸບັນຢຸດການບໍລິການຊົ່ວຄາວ).
- ☐ **ສະໜາມບິນສາກົນປາກເຊ** ມີພຽງແຕ່ສາຍການບິນຂອງ Lao Airline ບິນໄປພຽງແຕ່ Phanom Penh, Hochinminh.
- ☐ ນອກຈາກນີ້, ກໍຍັງມີສະໜາມບິນຢູ່ແຂວງຕ່າງໆ, ແຕ່ໃຫ້ການບໍລິການສໍາລັບການບິນພາຍໃນ ສປປ ລາວ ເທົ່ານັ້ນ.

### ທາງບົກ:

### ດ່ານສາກົນລະຫວ່າງ ລາວ-ໄທ:

| | |
|---|---|
| ☐ ດ່ານ ສາມຫຼ່ຽມຄໍາ | ແຂວງ ບໍ່ແກ້ວ - ສາມຫຼ່ຽມຄໍາ ແຂວງຊຽງຣາຍ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ IV | ແຂວງ ບໍ່ແກ້ວ - ແຂວງຊຽງຣາຍ |
| ☐ ດ່ານ ນໍ້າເງິນ | ແຂວງ ໄຊຍະບູລີ - ຫ້ວຍໂກນ ແຂວງຫວັດນ່ານ |
| ☐ ດ່ານ ຂົວມິດຕະພາບນໍ້າເຫືອງ | ແຂວງ ໄຊຍະບູລີ - ແຂວງ ເລີຍ |
| ☐ ດ່ານ ພູດູ່ | ແຂວງ ໄຊຍະບູລີ - ແຂວງ ອຸດຕະຣະດິດ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ I | ນະຄອນຫຼວງວຽງຈັນ - ແຂວງ ໜອງຄາຍ |
| ☐ ດ່ານ ສະຖານີລົດໄຟທ່ານາແລ້ງ | ນະຄອນຫຼວງວຽງຈັນ |
| ☐ ດ່ານ ທ່າເຮືອປາກຊັນ | ແຂວງ ບໍລິຄໍາໄຊ - ແຂວງ ບຶງການ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ III | ແຂວງຄໍາມ່ວນ - ແຂວງ ນະຄອນພະນົມ |
| ☐ ດ່ານ ຂົວມິດຕະພາບລາວ - ໄທ II | ແຂວງ ສະຫວັນນະເຂດ - ແຂວງ ມຸກດາຫານ |
| ☐ ດ່ານ ວັງເຕົ່າ | ແຂວງ ຈໍາປາສັກ - ຊ່ອງເມັກ ແຂວງ ອຸບົນຣາຊະທານີ |
| ☐ ດ່ານ ປາງມອນ | ແຂວງ ໄຊຍະບູລີ - ບ້ານຮວກ ແຂວງ ພະເຢົາ |

☐ ດ່ານ ທ່າບົກທ່ານາແລ້ງ	ນະຄອນຫຼວງວຽງຈັນ

**ດ່ານສາກົນລະຫວ່າງ ລາວ-ຈີນ:**

☐ ດ່ານ ລານຕຸຍ	ແຂວງ ຜົ້ງສາລີ - ເມືອງຄຳ "ເມືອງເຄັງ" ແຂວງ ຢຸນນານ

☐ ດ່ານ ບໍ່ເຕັນ	ແຂວງ ຫຼວງນໍ້າທາ - ບໍ່ຫານ ແຂວງ ຢຸນນານ

☐ ດ່ານ ທາງລົດໄຟ-ບໍ່ເຕັນ	ແຂວງ ຫຼວງນໍ້າທາ - ບໍ່ຫານ ແຂວງ ຢຸນນານ

**ດ່ານສາກົນລະຫວ່າງ ລາວ-ຫວຽດນາມ:**

☐ ດ່ານ ປາງໂຫົກ	ແຂວງ ຜົ້ງສາລີ - ໄຕຈາງ ແຂວງ ດຽນບຽນ

☐ ດ່ານ ນໍ້າໂສຍ	ແຂວງ ຫົວພັນ - ນາແມວ ແຂວງ ແທ່ງຮວາ

☐ ດ່ານ ນໍ້າກັ່ນ	ແຂວງ ຊຽງຂວາງ - ນໍ້າກັ່ນ ແຂວງ ເຫງະອານ

☐ ດ່ານ ນໍ້າພາວ	ແຂວງ ບໍລິຄຳໄຊ - ເກົາແຈວ ແຂວງ ຮາຕິງ

☐ ດ່ານ ນາເພົ້າ	ແຂວງ ຄຳມ່ວນ - ຈະລໍ ແຂວງ ກວາງບິງ

☐ ດ່ານ ແດນສະຫວັນ	ແຂວງ ສະຫວັນນະເຂດ - ລາວບາວ ແຂວງ ກວາງຈີ

☐ ດ່ານ ລະໄລ	ແຂວງ ສາລະວັນ - ລະໄລ ແຂວງ ກວາງຈີ

☐ ດ່ານ ພູເກືອ	ແຂວງ ອັດຕະປື - ເບີອີ ແຂວງ ກອນຕູມ

☐ ດ່ານ ດາກຕະອອກ	ແຂວງ ເຊກອງ - ນ້າມຢາງ ແຂວງ ກວາງນາມ

**ດ່ານສາກົນລະຫວ່າງ ລາວ-ກຳປູເຈຍ:**

☐ ດ່ານ ໜອງນົກຂຽນ	ແຂວງ ຈຳປາສັກ - ຕຣາປຽນ ແຂວງ ຊຽງແຕງ

**ດ່ານສາກົນລະຫວ່າງ ລາວ-ມຽນມາ:**

☐ ດ່ານ ບ້ານເມືອງມອມ	ແຂວງ ບໍ່ແກ້ວ - ວັງປຸ່ງ ແຂວງ ທ່າຂີ້ເຫຼັກ

# ດ່ານສາກົນເຂົ້າ-ອອກເມືອງ ໃນ ສປປ ລາວ



# ພາກທີ I: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2024

## ສະຫຼຸບໂດຍຫຍໍ້

## ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວຕ່າງປະເທດ

ອົງການການທ່ອງທ່ຽວໂລກ (UN Tourism) ເປີດເຜີຍຂໍ້ມູນວ່າອຸດສາຫະກຳການທ່ອງ ທ່ຽວໄດ້ຟື້ນຕົວຫຼັງຈາກການລະບາດຂອງໂຄວິດແລ້ວ ໃນປີ 2024, ມີຜູ້ຄົນປະມານ 1.4 ພັນລ້ານຄົນເດີນທາງໄປຕ່າງປະເທດ, ຄິດເປັນ 99% ຂອງຈຳນວນດຽວກັນໃນປີ 2019 ກ່ອນການແຜ່ລະບາດຂອງໂຄວິດ 19.

ອົງການການທ່ອງທ່ຽວໂລກ ຍັງລະບຸວ່າ ການເດີນທາງທີ່ໃຊ້ຈ່າຍໃນອຸດສາຫະກຳການທ່ອງທ່ຽວ ປະມານໄດ້ວ່ານັກທ່ອງທ່ຽວແຕ່ລະຄົນໃຊ້ຈ່າຍຫຼາຍກວ່າ 1,000 ໂດລາຕໍ່ຄົນ ສັນຍານຂອງການທ່ອງທ່ຽວທີ່ກັບມາເໝືອນຍຸກກ່ອນ ອາດສັງເກດໄດ້ຈາກການທີ່ນັກທ່ອງທ່ຽວຫຼາຍຄົນ ເລີ່ມປະສົບກັບຕົນເອງຄື: ຕ້ອງຈອງປີ້ຍົນ, ຈອງລົດໂດຍສານ ຫຼື ຈອງໂຮງແຮມ ຕ້ອງຈອງລ່ວງຫນ້າໂດນຂຶ້ນ ກວ່າຊ່ວງ 4–5 ປີທີ່ຜ່ານມາ ເພື່ອໃຫ້ໄດ້ລາຄາທີ່ບໍ່ແພງ ແລະ ຍັງມີທີ່ວ່າງເຫຼືອຕະຫຼອດຈົນແຖວຜູ້ໂດຍສານ ໃນສະໜາມບິນ ຫຼື ແຖວຂອງນັກທ່ອງທ່ຽວ ທີ່ຕໍ່ຄິວຕາມສະຖານທີ່ທ່ອງທ່ຽວ ຊື່ດັງກໍເລີ່ມກັບມາຍາວຢຽບອີກຄັ້ງ.

ເນື່ອງຈາກ ສປປ ລາວ ຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ ແລະ ອາຊີຕາເວັນອອກສຽງໃຕ້, ສປປ ລາວ ຈຶ່ງເປັນໜຶ່ງໃນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວທີ່ເດີນທາງມາຈາກທາງໄກ ທີ່ມາທ່ຽວປະເທດອ້ອມຂ້າງ ເຊັ່ນ: ປະເທດໄທ, ສສ ຫວຽດນາມ ແລະ ກຳປູເຈຍ ແລ້ວເດີນທາງຕໍ່ເຂົ້າມາຍັງ ສປປ ລາວ. ການເດີນທາງເຂົ້າມາຢ້ຽມຢາມ ສປປ ລາວ ຂອງນັກທ່ອງທ່ຽວຕ່າງປະເທດແມ່ນຂຶ້ນກັບຫຼາຍປັດໄຈ ເຊັ່ນ: ການອຳນວຍຄວາມສະດວກດ້ານການຂົນສົ່ງ, ການເຂົ້າ-ອອກປະເທດ, ຄວາມໂດດເດັ່ນທາງດ້ານສະຖານທີ່ທ່ອງທ່ຽວທີ່ຫຼາກຫຼາຍ ແລະ ຄຸນນະພາບຂອງຜະລິດຕະພັນການທ່ອງທ່ຽວ, ຄວາມສະຫງົບ, ຄວາມປອດໄພຂອງນັກທ່ອງທ່ຽວ ແລະ ອື່ນໆ. ນອກຈາກນັ້ນກໍຍັງມີປັດໄຈອື່ນໆ ເຊັ່ນ: ສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19, ໄພພິບັດທາງທຳມະຊາດ, ສະພາບການທາງດ້ານເສດຖະກິດ, ດ້ານການເມືອງ, ການກໍ່ການຮ້າຍ ແລະ ອື່ນໆ.

ໃນໄລຍະປີ 1990 ຫາ 2015 ຈຳນວນນັກທ່ອງທ່ຽວຕ່າງປະເທດເຂົ້າມາລາວເພີ່ມຂຶ້ນຢ່າງຕໍ່ເນື່ອງໃນປີ 1990 ມີຈຳນວນ 14,400 ເທື່ອຄົນ, ມາເປັນ 4,684,429 ເທື່ອຄົນ ປີ 2015. ໃນປີ 2016 ທ່າອ່ຽງດັ່ງກ່າວໄດ້ຫຼຸດລົງ ເມື່ອທຽບໃສ່ປີ 2015 ຫຼຸດລົງ -10% ແລະ ຫຼຸດລົງອີກ -8.7% ໃນປີ 2017 (3,868,838 ເທື່ອຄົນ) ເຖິງແນວໃດກໍ່ຕາມຂະແໜງການທ່ອງທ່ຽວຍັງເປັນຕົວຂັບເຄື່ອນໃນການພັດທະນາເສດຖະກິດ–ສັງຄົມ ແລະ ປີທ່ອງທ່ຽວລາວ 2018 ປະສົບຜົນສຳເລັດ, ທ່າອ່ຽງທາງລົບນີ້ເລີ່ມມີທ່າອ່ຽງປິ້ນກັບນັກທ່ອງທ່ຽວເພີ່ມຂຶ້ນເລັກນ້ອຍ 8.2% ເມື່ອທຽບໃສ່ປີ 2017, ໃນປີ 2019 ການຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍການເພີ່ມຂຶ້ນຂອງນັກທ່ອງທ່ຽວຕ່າງປະເທດ 14.4% ເມື່ອທຽບໃສ່ປີ 2018.

ໂດຍລວມແລ້ວ, ຈຳນວນຕົວເລກນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຖິງວ່າຈະມີບາງໄລຍະຈະເພີ່ມຂຶ້ນຫຼາຍ ແລະ ບາງໄລຍະຈຳນວນຫຼຸດລົງຫຼາຍກໍຕາມ, ແຕ່ຈຳນວນຕົວເລກນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມກໍຍັງມີທ່າອ່ຽງຄ່ອຍໆເພີ່ມຂຶ້ນ.

ໃນປີ 2024 ຈຳນວນນັກທ່ອງທ່ຽວຕ່າງປະເທດທ່ຽວລາວ ຫຼາຍຂຶ້ນ ແຕ່ຍັງລະດັບຕ່ຳກວ່າກ່ອນການລະບາດຂອງພະຍາດໂຄວິດ-19 ແລະ ການຟື້ນຕົວຂອງນັກທ່ອງທ່ຽວຕ່າງປະເທດຍັງບໍ່ທົ່ວເຖິງ ດ້ວຍສະພາບແວດລ້ອມຂອງຕະຫຼາດຍັງມີປັດໄຈທ້າທາຍຫຼາກຫຼາຍ ໂດຍສະເພາະປັດໄຈຄວາມສ່ຽງຈາກແນວໂນ້ມເສດຖະກິດຂອງໂລກ ຢ່າງໃນ

ສະຫະລັດ ແລະ ເອີຣົບ ຫຼາຍປະເທດເຂົ້າສູ່ພາວະທົດຖອຍ ຄວາມສ່ຽງຕໍ່ການຟື້ນໂຕຂອງລາຍໄດ້, ການມີວຽກເຮັດງານທຳ, ສະຖານະການສົງຄາມ ທີ່ຍັງຕ້ອງຕິດຕາມຢ່າງໃກ້ສິດ ແລະ ບັນຫາຄ່າຄອງຊີບທີ່ຍັງຊົງຕົວສູງ, ເຮັດໃຫ້ຕ້ອງການວາງແຜນປັບປຸງ ຮັດກຸມ ໃນການເຈາະຕະຫຼາດນັກທ່ອງທ່ຽວຕ່າງປະເທດ ໃຫ້ມີຄວາມຫຼາກຫຼາຍຂຶ້ນ ເພື່ອກະຈາຍຄວາມສ່ຽງ ລວມເຖິງການສຶກສາທິດທາງເຫັນຂອງຕະຫຼາດ ເພື່ອພັດທະນາຜະລິດຕະພັນໃຫ້ຕອບໂຈດຄວາມຕ້ອງການຂອງນັກທ່ອງທ່ຽວ ແລະ ຄຸນນະພາບການໃຫ້ບໍລິການທີ່ດີຂຶ້ນ.

ໃນປີ 2024 ເປັນປີທ່ອງທ່ຽວລາວ (Visit Laos Year 2024) ຊຶ່ງຖືວ່າເປັນປີທີ່ພາບລວມການທ່ອງທ່ຽວທົ່ວໂລກຟື້ນຕົວຢ່າງຊັດເຈນ, ສຳລັບປະເທດລາວກໍເປັນປີໜຶ່ງ ທີ່ມີຄວາມໝາຍຄວາມສຳຄັນສຳລັບການທ່ອງທ່ຽວ ຂອງ ສປປ ລາວ, ເຊິ່ງມີນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ນັບແຕ່ເດືອນ ມັງກອນ-ທັນວາ ປີ 2024 ມີຈຳນວນທັງໝົດ 4,120,832 ເທື່ອຄົນ, ເພີ່ມຂຶ້ນ 21% ຈາກປີ 2023. ແຕ່ຖ້າສົມທຽບໃສ່ປີ 2019 ກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ແມ່ນຫລຸດລົງ – 14% (ປີ 2019 ມີຈຳນວນນັກທ່ອງທ່ຽວ 4,791,065 ເທື່ອຄົນ).

ເມື່ອປຽບທຽບຄວາມສຳຄັນຂອງການທ່ອງທ່ຽວ, ດ້ານລາຍຮັບທີ່ເປັນເງິນຕາຕ່າງປະເທດ ອຸດສາຫະກຳການທ່ອງທ່ຽວໃນປີ 2024 ສ້າງລາຍຮັບໄດ້ 2,054.5 ລ້ານໂດລາສະຫະລັດ, ຈັດໃນລຳດັບທີ 4 ຂອງມູນຄ່າການສົ່ງອອກ ເມື່ອທຽບກັບອຸດສາຫະກຳອື່ນໆ. ໃນປີ 2023 ຢູ່ໃນລຳດັບທີ 4 ຂອງມູນຄ່າການສົ່ງອອກ ເຊິ່ງມູນຄ່າລາຍຮັບໃນປີ 2023 ຈຳນວນ 1,269.6 ລ້ານໂດລາສະຫະລັດ. ຖືວ່າອຸດສາຫະກຳການທ່ອງທ່ຽວ ເປັນແຫຼ່ງລາຍຮັບທາງໜຶ່ງ ທີ່ສຳຄັນຂອງ ສປປ ລາວ ຮອງຈາກອຸດສາຫະກຳໄຟຟ້າ, ອຸດສາຫະກຳແຮ່ທາດ ແລະ ອຸດສາຫະກຳອື່ນໆ.

## ຕາຕະລາງທີ 1: ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ, ລາຍຮັບຈາກການທ່ອງທ່ຽວ ແລະ ອັດຕາເພີ່ມສະເລ່ຍແຕ່ປີ 1990-2024

| ປີ | ຈຳນວນນັກທ່ອງທ່ຽວ | (%) Δ | ໄລຍະພັກເຊົາສະເລ່ຍຂອງນັກທ່ອງທ່ຽວສາກົນ | ໄລຍະພັກເຊົາສະເລ່ຍຂອງນັກທ່ອງທ່ຽວພາກພື້ນ | ໄລຍະພັກເຊົາສະເລ່ຍຂອງນັກທ່ອງທ່ຽວທັງໝົດທີ່ເຂົ້າມາຢ້ຽມຢາມ | ລາຍຮັບຈາກການທ່ອງທ່ຽວ |
|---|---|---|---|---|---|---|
| 1990 | 14,400 | - | - | - | - | - |
| 1991 | 37,613 | 161 | - | - | - | 2,250,000 |
| 1992 | 87,571 | 133 | - | - | - | 4,510,000 |
| 1993 | 102,946 | 18 | 3.5 | - | - | 6,280,000 |
| 1994 | 146,155 | 42 | 5.1 | - | - | 7,557,600 |
| 1995 | 346,460 | 137 | 4.3 | - | - | 24,738,480 |
| 1996 | 403,000 | 16 | 4.8 | 1.8 | 3.3 | 43,592,263 |
| 1997 | 463,200 | 15 | 5.0 | 3.0 | 4.0 | 73,276,904 |
| 1998 | 500,200 | 8 | 5.0 | 2.4 | 3.7 | 79,960,145 |
| 1999 | 614,278 | 23 | 5.5 | 2.4 | 4.0 | 97,265,324 |
| 2000 | 737,208 | 20 | 5.5 | 2.4 | 4.0 | 113,898,285 |
| 2001 | 673,823 | -9 | 8.0 | 2.4 | 5.2 | 103,786,323 |
| 2002 | 735,662 | 9 | 6.5 | 2.1 | 4.3 | 113,409,883 |
| 2003 | 636,361 | -14 | 6.0 | 2.0 | 4.0 | 87,302,412 |
| 2004 | 894,806 | 41 | 6.5 | 2.0 | 4.3 | 118,947,707 |
| 2005 | 1,095,315 | 22 | 7.0 | 2.0 | 4.5 | 146,770,074 |
| 2006 | 1,215,106 | 11 | 7.0 | 2.0 | 4.5 | 173,249,896 |
| 2007 | 1,623,943 | 34 | 7.0 | 2.0 | 4.5 | 233,304,695 |
| 2008 | 1,736,787 | 7 | 6.5 | 2.0 | 4.3 | 275,515,758 |
| 2009 | 2,008,363 | 16 | 7.0 | 2.0 | 4.5 | 267,700,224 |
| 2010 | 2,513,028 | 25 | 7.0 | 2.0 | 4.5 | 381,669,031 |
| 2011 | 2,723,564 | 8 | 7.0 | 2.0 | 4.5 | 406,184,338 |
| 2012 | 3,330,072 | 22 | 7.2 | 2.0 | 4.6 | 506,022,586 |
| 2013 | 3,779,490 | 13 | 8.4 | 2.0 | 5.2 | 595,909,127 |
| 2014 | 4,158,719 | 10 | 7.9 | 2.0 | 4.9 | 641,636,543 |
| 2015 | 4,684,429 | 13 | 7.5 | 2.0 | 4.8 | 725,365,681 |
| 2016 | 4,239,047 | -10 | 7.5 | 2.0 | 4.8 | 724,191,957 |
| 2017 | 3,868,838 | -9 | 8.3 | 2.0 | 5.2 | 648,067,008 |
| 2018 | 4,186,432 | 8 | 7.9 | 2.0 | 5.0 | 811,010,661 |
| 2019 | 4,791,065 | 14 | 7.9 | 2.0 | 5.0 | 934,710,409 |
| 2020 | 896,447 | -82 | 7.9 | 2.0 | 5.0 | 213,367,141 |
| 2021 | - | - | - | - | - | - |
| 2022 | 1,294,365 | -73 | 9.6 | 2.0 | 5.8 | 264,511,231 |
| 2023 | 3,417,629 | 164 | 9.9 | 2.0 | 5.9 | 957,394,712 |
| 2024 | 4,120,832 | 21 | 10.5 | 2.0 | 6.3 | 1,421,992,819 |

## ຕາຕະລາງທີ 2: ສົມທຽບລາຍຮັບຈາກການທ່ອງທ່ຽວ ກັບມູນຄ່າການສົ່ງອອກ ແຕ່ປີ 2019-2024

| | 2024 | | 2023 | | 2022 | | 2021 | | 2020 | | 2019 | |
|---|---|---|---|---|---|---|---|---|---|---|---|---|
| ຜະລິດຕະພັນ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ | ລາຍຮັບ | ລຳດັບ |
| ທ່ອງທ່ຽວ | 2,054.5 | 4 | 1,269.6 | 4 | 537.5 | 5 | 93.5 | 7 | 213.3 | 5 | 934.7 | 4 |
| ຕັດຫຍິບ | 241.8 | 6 | 244.3 | 6 | 256.7 | 6 | 190.0 | 5 | 192.5 | 6 | 213.5 | 6 |
| ໄຟຟ້າ | 3,221.0 | 1 | 2,500.4 | 1 | 2,503.3 | 2 | 2,317.3 | 1 | 1,976.4 | 1 | 1,326.8 | 3 |
| ຜະລິດຕິພັນໄມ້ | 3.1 | 9 | 36.3 | 8 | 46.4 | 8 | 42.4 | 8 | 27.2 | 8 | 58.9 | 8 |
| ກາເຟ | 146.6 | 7 | 98.6 | 7 | 98.9 | 7 | 95.2 | 6 | 90.8 | 7 | 69.4 | 7 |
| ຜະລິດຕະພັນກະສິກຳ | 1,197.7 | 5 | 889.9 | 5 | 969.1 | 4 | 1,115.1 | 4 | 11,862.0 | 4 | 9,210.0 | 5 |
| ແຮ່ທາດ | 2,490.2 | 2 | 2,296.6 | 2 | 1,792.1 | 3 | 1,701.2 | 3 | 1,314.4 | 3 | 1,438.0 | 2 |
| ຫັດຖະກຳ | 6.8 | 8 | 8.5 | 9 | 14.2 | 9 | 12.9 | 9 | 4.6 | 9 | 54.3 | 9 |
| ອຸດສະຫະກຳອື່ນໆ | 2,618.6 | 3 | 2,294.6 | 3 | 2,516.9 | 1 | 2,112.5 | 2 | 1,375.7 | 2 | 1,781.7 | 1 |

ແຫຼ່ງຂໍ້ມູນຈາກ: ກະຊວງອຸດສະຫະກຳ ແລະ ການຄ້າ (ຫົວໜ່ວຍ: ລ້ານໂດລ້າ)

## ເສັ້ນສະແດງທີ 1: ອັດຕາການເພີ່ມຂຶ້ນຈຳນວນນັກທ່ອງທ່ຽວຕ່າງປະເທດ ແລະ ລາຍຮັບຈາກການທ່ອງທ່ຽວ

### ຈຳນວນນັກທ່ອງທ່ຽວຕ່າງປະເທດ

| 2023 | 2024 |
|---|---|
| 3,417,629 | 4,120,832 |

**ອັດຕາເພີ່ມຂຶ້ນເປັນ 21%**




### ລາຍຮັບ

| 2023 | 2024 |
|---|---|
| $ 957,394,712 | $ 1,421,992,819 |

**ອັດຕາເພີ່ມຂຶ້ນເປັນ 49%**



## ເສັ້ນສະແດງທີ 2: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ປີ 2012-2024




## ເສັ້ນສະແດງທີ 3: ຈຳນວນນັກທ່ອງທ່ຽວຕ່າງປະເທດແຕ່ລະເດືອນ ໃນປີ 2019-2024



## ສະພາບການທ່ອງທ່ຽວຈາກນັກທ່ອງທ່ຽວແຕ່ລະພາກພື້ນ

ຜ່ານການວິເຄາະຂໍ້ມູນເຫັນວ່າ ນັກທ່ອງທ່ຽວຕ່າງປະເທດທີ່ມາທ່ອງທ່ຽວ ສປປ ລາວ ໃນເດືອນມັງກອນ ຫາ ທັນວາ ປີ 2024 ກວມອັດຕາສ່ວນຫຼາຍກວ່າໝູ່ ແມ່ນນັກທ່ອງທ່ຽວມາຈາກກຸ່ມພາກພື້ນ ອາຊຽນ ມີຈຳນວນທັງໝົດ 2,366,200 ເທື່ອຄົນ, ມີອັດຕາສ່ວນກວມຕະຫຼາດຂອງນັກທ່ອງທ່ຽວເຂົ້າທັງໝົດ 57.42%; ຮອງລົງມາແມ່ນນັກທ່ອງທ່ຽວຈາກກຸ່ມພາກພື້ນ ອາຊີ ແລະ ປາຊີຟິກ ມີຈຳນວນ 1,370,403 ເທື່ອຄົນ, ກວມເອົາ 33.26%, ນັກທ່ອງທ່ຽວຈາກພາກພື້ນ ເອີຣົບ ມີຈຳນວນ 249,938 ເທື່ອຄົນ, ກວມເອົາ 6.07%; ນັກທ່ອງທ່ຽວຈາກກຸ່ມພາກພື້ນ ອາເມລິກາ ມີຈຳນວນ 120,235 ເທື່ອຄົນ, ກວມເອົາ 2.92% ແລະ ນັກທ່ອງທ່ຽວຈາກກຸ່ມພາກພື້ນ ອາຟຣິກາ ແລະ ຕາເວັນອອກກາງ ມີຈຳນວນ 14,056 ເທື່ອຄົນ ມີອັດຕາສ່ວນຫຼຸດລົງ 0,34%, ສັງເກດເຫັນວ່ານັກທ່ອງທ່ຽວທີ່ມາຈາກແຕ່ລະພາກພື້ນໄດ້ມີອັດຕາສ່ວນເພີ່ມຂຶ້ນ ເນື່ອງຈາກທຸກປະເທດມີນະໂຍບາຍເປີດປະເທດຢ່າງເຕັມຮູບແບບ ແລະ ອີກສ່ວນໜຶ່ງເກີດຈາກຊ່ວງໂຄວິດ-19 ທີ່ນັກທ່ອງທ່ຽວຫຼາຍຄົນບໍ່ສາມາດເດີນທາງໄປຕ່າງປະເທດ ຫຼື ທ່ອງທ່ຽວບ່ອນໃດບ່ອນໜຶ່ງໄດ້, ເມື່ອສະຖານະການແຜ່ລະບາດສິ້ນສຸດລົງ ທຸກປະເທດເປີດຮັບການທ່ອງທ່ຽວຄືນມາ ພ້ອມມາດຕະການກະຕຸ້ນ ເພື່ອຕ້ອນຮັບນັກທ່ອງທ່ຽວ ສົ່ງຜົນໃຫ້ນັກທ່ອງທ່ຽວທີ່ຖືກກົດດັນມາດົນ ໃນຊ່ວງຫຼາຍປີຜ່ານມາ ກໍກັບມາທ່ອງທ່ຽວອີກຄັ້ງເພື່ອທ່ອງທ່ຽວ, ພັກຜ່ອນ ແລະ ຮ່ວມກິດຈະກຳການທ່ອງທ່ຽວອື່ນໆ.

### ເສັ້ນສະແດງທີ 4: ນັກທ່ອງທ່ຽວພາກພື້ນ ໃນປີ 2024



### ຕາຕະລາງທີ 3: ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2024

| ປີ | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 |
|---|---|---|---|---|---|---|---|---|
| ອາຊຽນ | 2,747,096 | 2,886,844 | 3,198,829 | 555,519 | - | 1,124,376 | 2,231,593 | 2,366,200 |
| ອາຊີ ແລະ ປາຊີຟິກ | 884,875 | 1,055,415 | 1,317,478 | 226,297 | - | 93,297 | 885,638 | 1,370,403 |
| ເອີຣົບ | 161,194 | 165,808 | 182,465 | 70,459 | - | 46,729 | 200,858 | 249,938 |
| ອາເມລິກາ | 64,227 | 69,101 | 82,652 | 30,176 | - | 25,440 | 87,912 | 120,235 |
| ອາຟຣິກາ ແລະ ຕາເວັນອອກກາງ | 11,446 | 9,264 | 9,641 | 3,996 | - | 4,523 | 11,628 | 14,056 |
| **ລວມທັງໝົດ** | **3,868,838** | **4,186,432** | **4,791,065** | **886,447** | **-** | **1,294,365** | **3,417,629** | **4,120,832** |

### ຕາຕະລາງທີ 4: ອັດຕາສ່ວນແບ່ງຕະຫຼາດຂອງນັກທ່ອງທ່ຽວແຕ່ລະພາກພື້ນ (%) 2017-2024

| ປີ | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 |
|---|---|---|---|---|---|---|---|---|
| ອາຊຽນ | 71.00% | 68.96% | 66.77 | 62.67% | - | 86.87% | 65.30% | 57.42% |
| ອາຊີ ແລະ ປາຊີຟິກ | 22.87% | 25.21% | 27.50% | 25.53% | - | 7.21% | 25.91% | 33.26% |
| ເອີຣົບ | 4.17% | 3.96% | 3.81% | 7.95% | - | 3.61% | 5.88% | 6.07% |
| ອາເມລິກາ | 1.66% | 1.65% | 1.73% | 3.40% | - | 1.97% | 2.57% | 2.92% |
| ອາຟຣິກາ ແລະ ຕາເວັນອອກກາງ | 0.30% | 0.22% | 0.20% | 0.45% | - | 0.35% | 0.34% | 0.34% |
| **ລວມທັງໝົດ** | **100%** | **100%** | **100%** | **100%** | | **100%** | **100%** | **100%** |

### ຕາຕະລາງທີ 5: ອັດຕາເພີ່ມຂຶ້ນ ໃນແຕ່ລະປີ (%)

| ປີ | 2017/2016 | 2018/2017 | 2019/2018 | 2020/2019 | 2021/2020 | 2022/2019 | 2023/2022 | 2024/2023 |
|---|---|---|---|---|---|---|---|---|
| ອາຊຽນ | -11% | 5% | 11% | -83% | - | -65% | 98% | 6% |
| ອາຊີ ແລະ ປາຊີຟິກ | 6% | 19% | 25% | -83% | - | -93% | 849% | 55% |
| ເອີຣົບ | -27% | 300% | 10% | -61% | - | -74% | 330% | 24% |
| ອາເມລິກາ | -26% | 8% | 20% | -63% | - | -69% | 246% | 37% |
| ອາຟຣິກາ ແລະ ຕາເວັນອອກກາງ | 2% | -19% | 4% | -59% | - | -53% | 157% | 21% |
| **ລວມທັງໝົດ** | **-8.7%** | **8.2%** | **14.4%** | **-81.5%** | **-** | **-73%** | **164%** | **21%** |

## ການເດີນທາງເຂົ້າມາຂອງນັກທ່ອງທ່ຽວ

ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ໃນປີ 2024 ສ່ວນຫຼາຍແມ່ນນັກທ່ອງທ່ຽວທີ່ນຳໃຊ້ໜັງສືຜ່ານແດນ ຈຳນວນ 3,648,071 ເທື່ອຄົນ ສະເລ່ຍ 88.53%, ນັກທ່ອງທ່ຽວຕ່າງປະເທດ 759,762 ເທື່ອຄົນ. ໃນນັ້ນນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ 2,888,309 ເທື່ອຄົນ, ເຊິ່ງສັງເກດເຫັນວ່ານັກທ່ອງທ່ຽວຊາຍແດນສ່ວນຫຼາຍແມ່ນໃຊ້ໜັງສືຜ່ານແດນເປັນຫຼັກ, ສາເຫດຍ້ອນວ່າ ບັດຜ່ານແດນສາມາດເດີນທາງໄດ້ສະເພາະໃນພື້ນທີ່ຈຳກັດ. ແຕ່ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ໃນປີ 2024 ສ່ວນຫຼາຍຕ້ອງການເດີນທາງໄປຫຼາຍບ່ອນ ໂດຍສະເພາະການນຳໃຊ້ລົດໄຟ ລາວ-ຈີນ ເພື່ອເດີນທາງໄປສະຖານທີ່ຕ່າງໆ ເຊັ່ນ: ຫຼວງພະບາງ, ວັງວຽງ, ອຸດົມໄຊ ແລະ ບໍ່ເຕັນ ຈຶ່ງຈຳເປັນທີ່ຕ້ອງໃຊ້ໜັງສືເດີນທາງ (PASSPORT) ປະເທດທີ່ນຳໃຊ້ໜັງສືຜ່ານແດນເຂົ້າມາ ສປປ ລາວ ຫຼາຍທີ່ສຸດ ແມ່ນນັກທ່ອງທ່ຽວທີ່ມາຈາກປະເທດ ສສ ຫວຽດນາມ ທີ່ມີຊາຍແດນຕິດກັບ ສປປ ລາວ ມີຈຳນວນ 997,527 ເທື່ອຄົນ ສະເລ່ຍ 27.34% ຂອງຜູ້ທີ່ນຳໃຊ້ໜັງສືຜ່ານແດນທັງໝົດ ຕໍ່ມາແມ່ນນັກທ່ອງທ່ຽວຈາກປະເທດໄທ ມີຈຳນວນ 931,379 ເທື່ອຄົນ ສະເລ່ຍ 25.53% ແລະ ນັກທ່ອງທ່ຽວຈາກປະເທດ ສປ ຈີນ ມີຈຳນວນ 918,420 ເທື່ອຄົນ ສະເລ່ຍ 25.18%, ສຳຫຼັບນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນ (BORDER PASS) ມີຈຳນວນທັງໝົດ 472,761 ເທື່ອຄົນ ສ່ວນຫຼາຍເປັນນັກທ່ອງທ່ຽວມາຈາກປະເທດໄທ ຈຳນວນ 284,174 ເທື່ອຄົນ ສະເລ່ຍ 60.11% ຂອງນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນທັງໝົດ ຕໍ່ມາແມ່ນນັກທ່ອງທ່ຽວຈາກປະເທດ ສປ ຈີນ ມີຈຳນວນ 129,614 ເທື່ອຄົນ ສະເລ່ຍ 27.42% ແລະ ສ່ວນຫຼາຍເປັນນັກທ່ອງທ່ຽວລາຍວັນ ແລະ ພັກເຊົາຊົ່ວຄາວ ທີ່ໃຊ້ບໍລິການຕາມສະຖານທີ່ພັກແຮມຕ່າງໆ.

ການເຂົ້າມາຂອງນັກທ່ອງທ່ຽວທັງໝົດ ເຫັນວ່າມີພຶດຕິກຳມາທ່ອງທ່ຽວເປັນໃຊ້ເວລາໃນການທ່ອງທ່ຽວຢູ່ ສປປ ລາວ ສະເລ່ຍ 6.25 ວັນ, ມີຄ່າໃຊ້ຈ່າຍສະເລ່ຍ 74.53 ໂດລາ/ຄົນ/ວັນ ໂດຍນັກທ່ອງທ່ຽວສາກົນຈະມີໄລຍະເວລາພັກເຊົາດົນກວ່ານັກທ່ອງທ່ຽວຊາຍແດນ ເນື່ອງຈາກການເດີນທາງໄລຍະໄກ ໄລຍະເວລາພັກເຊົາສະເລ່ຍ 10.49 ວັນ, ມີຄ່າໃຊ້ຈ່າຍສະເລ່ຍ 119.76 ໂດລາ/ຄົນ/ວັນ, ຖືວ່າເປັນກຸ່ມນັກທ່ອງທ່ຽວທີ່ສ້າງລາຍໄດ້ຫຼັກໃຫ້ກັບການທ່ອງທ່ຽວຂອງ ສປປ ລາວ. ສຳລັບນັກທ່ອງທ່ຽວຊາຍແດນ ທີ່ໃຊ້ໜັງສືຜ່ານແດນ ເດີນທາງມາຈາກ ປະເທດ ໄທ, ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ ແລະ ມຽນມາ ຈະມີໄລຍະເວລາພັກເຊົາຢູ່ໃນ ສປປ ລາວ ປະມານ 3 ວັນ, ມີຄ່າໃຊ້ຈ່າຍສະເລ່ຍປະມານ 30–80 ໂດລາ/ຄົນ/ວັນ. ແຕ່ສຳລັບນັກທ່ອງທ່ຽວທີ່ໃຊ້ບັດຜ່ານແດນ ຈະຢູ່ໃນ ສປປ ລາວ ປະມານ 1–2 ວັນ ແລະ ໃຊ້ຈ່າຍໜ້ອຍກວ່າກຸ່ມອື່ນໆ ປະມານ 12–20 ໂດລາ/ຄົນ/ວັນ.

ເປົ້າໝາຍໃນການເດີນທາງຂອງນັກທ່ອງທ່ຽວສາກົນໃນປີ 2024 ໂດຍສ່ວນຫຼາຍແລ້ວ ເດີນທາງເຂົ້າມາເພື່ອການທ່ອງທ່ຽວມີຈຳນວນ 3,428,532 ເທື່ອຄົນ, ສະເລ່ຍ 83.2% ຖ້າທຽບໃສ່ປີ 2023 ແມ່ນມີ 79.8%, ສຳລັບນັກທ່ອງທ່ຽວທີ່ເດີນທາງເຂົ້າມາ ໃນນາມ ທຸລະກິດ ຈຳນວນ 502,742 ເທື່ອຄົນ, ສະເລ່ຍ 12.2%. ທຽບກັບປີ 2023 ແລ້ວແມ່ນສະເລ່ຍ 15.5%; ການເດີນທາງເພື່ອມາຢ້ຽມຢາມຄອບຄົວ ມີຈຳນວນ 115,383 ເທື່ອຄົນ, ສະເລ່ຍ 2.8% ເທົ່າກັບປີ 2023 ແມ່ນ 2.7%. ສຳລັບນັກທ່ອງທ່ຽວທີ່ເຂົ້າມາເພື່ອທັດສະນະສຶກສາ ໃນປີ 2024 ມີຈຳນວນ 32,967 ເທື່ອຄົນ , ສະເລ່ຍ 0.8%.

ການເດີນທາງເຂົ້າ ສປປ ລາວ ຂອງນັກທ່ອງທ່ຽວຕ່າງປະເທດທີ່ເດີນທາງດ້ວຍເຮືອບິນ ໃນປີ 2024 ຈຳນວນ 1,879,099 ເທື່ອຄົນ, ສະເລ່ຍ 45.6%, ຖ້າທຽບກັບປີ 2023 ສະເລ່ຍ 48.6%. ສາເຫດທີ່ມີນັກທ່ອງທ່ຽວເດີນທາງດ້ວຍເຮືອບິນເພີ່ມຂຶ້ນຜ່ານມາ ແມ່ນຍ້ອນເປີດເສັ້ນທາງບິນໃໝ່ ເພື່ອຮອງຮັບນັກທ່ອງທ່ຽວຈາກ ສປ ຈີນ ແລະ ສ. ເກົາຫຼີ ເຂົ້າມາໃນ ສປປ ລາວ. ການເດີນທາງ ທາງອາກາດແມ່ນມີສາຍການບິນຈາກປະເທດ ໄທ, ສສ ຫວຽດນາມ, ຈີນ, ສ. ເກົາຫຼີ ເພື່ອຮອງຮັບການເຊື່ອມຕໍ່ຖ້ຽວບິນຈາກປະເທດເຫຼົ່ານີ້ມາທີ່ ສປປ ລາວ. ສຳລັບໃນປີ 2024 ການເດີນທາງ ທາງບົກ ສ່ວນຫຼາຍຈະເປັນການເດີນທາງຂອງນັກທ່ອງທ່ຽວພາກພື້ນໃກ້ຄຽງ ມີຈຳນວນ 2,241,733 ເທື່ອຄົນ ສະເລ່ຍ 54.4%, ສາເຫດມີນັກທ່ອງທ່ຽວເດີນທາງດ້ວຍທາງບົກຫຼາຍຍ້ອນມີຄົມມະນາຄົມຂົນສົ່ງທາງລົດໄຟເຮັດໃຫ້ການເດີນທາງເຂົ້າ-ອອກທາງພາກເໜືອຫາພາກກາງມີຄວາມສະດວກ ແລະ ວ່ອງໄວ.

## ຕາຕະລາງທີ 6: ຈຳນວນນັກທ່ອງທ່ຽວຕາມແຕ່ລະປະເພດ ປີ 2024

| ປະເພດ | ບັດຜ່ານແດນ | | ບັດຜ່ານແດນ | ໜັງສືຜ່ານແດນ | ລວມທັງໝົດ |
|---|---|---|---|---|---|
| | ນັກທ່ອງທ່ຽວລາຍວັນ | ນັກທ່ອງທ່ຽວຄ້າງຄືນ | | | |
| **ລວມທັງໝົດ** | **177,360** | **295,401** | **472,761** | **3,648,071** | **4,120,832** |
| **ນັກທ່ອງທ່ຽວສາກົນ** | | | | **759,762** | **759,762** |
| **ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ** | **177,360** | **295,401** | **472,761** | **2,888,309** | **3,361,070** |
| ໄທ | 113,669 | 170,505 | 284,174 | 931,379 | 1,215,553 |
| ຫວຽດນາມ | 18,703 | 37,974 | 56,677 | 997,527 | 1,054,204 |
| ຈີນ | 44,069 | 85,545 | 129,614 | 918,420 | 1,048,034 |
| ກຳປູເຈຍ | 919 | 1,377 | 2,296 | 21,104 | 23,400 |
| ມຽນມາ | | | | 19,879 | 19,879 |

## ຕາຕະລາງທີ 7: ລາຍຮັບຈາກການທ່ອງທ່ຽວຕ່າງປະເທດໃນປີ 2024

| ປະເພດນັກທ່ອງທ່ຽວ | ຈຳນວນນັກທ່ອງທ່ຽວທັງໝົດ (ຄົນ) | ໄລຍະພັກເຊົາສະເລ່ຍ (ມື້) | ກຳນົດການໃຊ້ຈ່າຍໂດຍສະເລ່ຍ ຕໍ່ຄົນ ຕໍ່ມື້ (ໂດລາສະຫະລັດ) | ລາຍຮັບຈາກການທ່ອງທ່ຽວໃນປີ 2024 (ໂດລາສະຫະລັດ) |
|---|---|---|---|---|
| **ລວມທັງໝົດ** | **4,120,832** | **6.25** | **74.53** | **1,421,992,819** |
| **ນັກທ່ອງທ່ຽວສາກົນ** | **759,762** | **10.49** | **119.76** | **954,475,629** |
| **ນັກທ່ອງທ່ຽວຊາຍແດນ ຫຼື ພາກພື້ນ** | **3,361,070** | | | **467,517,190** |
| ໄທ (ໜັງສືຜ່ານແດນ ຫຼື ປັດສະປໍ) | 931,379 | 3 | 52 | 145,295,124 |
| ໄທ (ບັດຜ່ານແດນ) | 284,174 | 1 | 20 | 5,683,480 |
| ຫວຽດນາມ (ໜັງສືຜ່ານແດນ ຫຼື ປັດສະປໍ) | 997,527 | 3 | 30 | 89,777,430 |
| ຫວຽດນາມ (ນັກທ່ອງທ່ຽວລາຍວັນ) | 56,677 | 1 | 12 | 680,124 |
| ຈີນ (ໜັງສືຜ່ານແດນ ຫຼື ປັດສະປໍ) | 918,420 | 3 | 80 | 220,420,800 |
| ຈີນ (ນັກທ່ອງທ່ຽວລາຍວັນ) | 129,614 | 1 | 15 | 1,944,210 |
| ກຳປູເຈຍ (ໜັງສືຜ່ານແດນ ຫຼື ປັດສະປໍ) | 21,104 | 3 | 30 | 1,899,360 |
| ກຳປູເຈຍ (ນັກທ່ອງທ່ຽວລາຍວັນ) | 2,296 | 1 | 12 | 27,552 |
| ມຽນມາ (ໜັງສືຜ່ານແດນ ຫຼື ປັດສະປໍ) | 19,879 | 3 | 30 | 1,789,110 |
| ມຽນມາ (ນັກທ່ອງທ່ຽວລາຍວັນ) | | 1 | 12 | - |

**ຕາຕະລາງທີ 8: ລັກສະນະເດີນທາງຂອງນັກທ່ອງທ່ຽວຕ່າງປະເທດ ແລະ ຈຸດປະສົງຂອງການທ່ອງທ່ຽວ ແຕ່ປີ 2018-2024**

| ປີ | 2018 | 2019 | 2020 | 2021 | 2022 | 2023 | 2024 |
|---|---|---|---|---|---|---|---|
| **ລວມທັງໝົດ** | **4,186,432** | **4,791,065** | **-** | **-** | **1,294,365** | **3,417,629** | **4,120,832** |
| **ຮູບແບບການເດີນທາງ** | | | | | | | |
| ທາງອາກາດ | 612,967 | 1,906,844 | - | - | 578,581 | 1,660,968 | 1,879,099 |
| ທາງບົກ | 3,573,465 | 2,884,221 | - | - | 715,784 | 1,756,661 | 2,241,733 |
| **ຈຸດປະສົງຂອງການຢ້ຽມຢາມ** | | | | | | | |
| ທຸລະກິດ | 309,796 | 287,464 | - | - | 38,831 | 529,732 | 502,742 |
| ທ່ອງທ່ຽວ | 3,391,010 | 4,010,121 | - | - | 1,216,703 | 2,727,268 | 3,428,532 |
| ຢ້ຽມຢາມຄອບຄົວ | 138,152 | 62,284 | - | - | 16,827 | 92,276 | 115,383 |
| ທາງການ, ກອງປະຊຸມ ແລະ ສໍາມະນາ | 58,610 | 100,612 | - | - | 5,177 | 3,418 | 8,242 |
| ທັດສະນະສຶກສາ | 121,407 | 301,837 | - | - | - | 30,759 | 32,967 |
| ທາງຜ່ານ | 20,932 | - | - | - | 2,589 | | |
| ອື່ນໆ | 146,525 | 28,746 | - | - | 12,944 | 34,176 | 37,087 |

## ນັກທ່ອງທ່ຽວຈາກຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ສປປ ລາວ

ນັກທ່ອງທ່ຽວທີ່ເດີນທາງເຂົ້າມາຢ້ຽມຢາມ ສປປ ລາວ ສ່ວນຫຼາຍມາຈາກທາງປະເທດ ໄທ, ສສ ຫວຽດນາມ, ສປ ຈີນ, ກໍາປູເຈຍ, ໃນນີ້ນັກທ່ອງທ່ຽວຈາກພາກພື້ນອາຊີ ຫຼາຍທີ່ສຸດ ເນື່ອງຈາກການເດີນທາງເຂົ້າມາສະດວກ, ມີຊາຍແດນຕິດຈອດກັນ ແລະ ມີສາຍການບິນໂດຍກົງເຂົ້າມາ ສປປ ລາວ.

ໃນປີ 2024, ນັກທ່ອງທ່ຽວຈາກປະເທດໄທ ເປັນອັນດັບທີ່ໜຶ່ງ ທີ່ເຂົ້າມາ ທ່ອງທ່ຽວຢູ່ ສປປ ລາວ ມີຈໍານວນ 1,215,553 ເທື່ອຄົນ, ສະເລ່ຍກວມເອົາ 29.50%. ເນື່ອງຈາກວ່າມີຄວາມສະດວກ ໃນການເດີນທາງເຂົ້າ-ອອກລະຫວ່າງປະເທດ, ຊາຍແດນຕິດຈອດກັນ, ພາສາ ແລະ ວັດທະນະທໍາໃກ້ຄຽງກັນ, ອັນດັບສອງແມ່ນນັກທ່ອງທ່ຽວຈາກປະເທດ ສສ ຫວຽດນາມ ມີຈໍານວນ 1,054,204 ເທື່ອຄົນ, ສະເລ່ຍກວມເອົາ 25.58% ເປັນອີກປະເທດໜຶ່ງທີ່ມີຊາຍແດນຕິດຈອດກັບ ສປປ ລາວ ທີ່ມີຊາຍແດນຮ່ວມກັນແຕ່ເໜືອຮອດໃຕ້ ແລະ ສາຍສໍາພັນອັນພິເສດຂອງສອງຊາດ ລາວ-ຫວຽດນາມ ຊຶ່ງເປັນແຮງດຶງດູດ ເຮັດໃຫ້ນັກທ່ອງທ່ຽວຈາກປະເທດດັ່ງກ່າວເຂົ້າມາ ສປປ ລາວ, ອັນດັບທີ່ສາມແມ່ນນັກທ່ອງທ່ຽວຈາກ ສປ ຈີນ ມີຈໍານວນ 1,048,034 ເທື່ອຄົນ, ສະເລ່ຍກວມເອົາ 25.43% ເປັນອີກປະເທດໜຶ່ງທີ່ມີຊາຍແດນຕິດຈອດກັນ, ມີການອອກນະໂຍບາຍຍົກເວັ້ນວີຊາແບບທົດລອງຂອງ ສປປ ລາວ ເພື່ອສົ່ງເສີມປີທ່ອງທ່ຽວລາວ 2024, ມີການເດີນທາງດ້ວຍເສັ້ນທາງເຊື່ອມຕໍ່ ລົດໄຟ ລາວ-ຈີນ, ມີການເພີ່ມຖ້ຽວບິນລະຫວ່າງສອງປະເທດ ລາວ-ຈີນ ແລະ ມີການໂຄສະນາຮ່ວມກັນດ້ານການທ່ອງທ່ຽວລະຫວ່າງສອງປະເທດ ດັ່ງກ່າວ ຢ່າງຕໍ່ເນື່ອງ ແລະ ການສື່ສານລະຫວ່າງພາສາ ແລະ ວັດທະນະທໍາຂອງບັນດາແຂວງ ທີ່ມີຊາຍແດນຮ່ວມກັນກໍ່ເຂົ້າໃຈກັນດີ ຊຶ່ງເປັນແຮງດຶງດູດທີ່ສໍາຄັນ ເຮັດໃຫ້ນັກທ່ອງທ່ຽວຈີນເຂົ້າມາ ສປປ ລາວ ນັບມື້ນັບຫຼາຍຂຶ້ນ. ນອກຈາກນີ້, ຍັງມີນັກທ່ອງທ່ຽວຈາກປະເທດ ສ.ເກົາຫຼີ ທີ່ມີຈໍານວນຫຼາຍກວ່າ 232,895 ເທື່ອຄົນ, ສະເລ່ຍກວມເອົາ 5.65% ຊຶ່ງນັກທ່ອງທ່ຽວກຸ່ມ ດັ່ງກ່າວຍັງກໍານົດເອົາ ສປປ ລາວ ເປັນອີກໜຶ່ງໃນຈຸດໝາຍປາຍທາງຂອງເຂົາເຈົ້າ ຍ້ອນມີຄວາມສະດວກໃນການເດີນທາງ (ມີສາຍການບິນໂດຍກົງ), ມີນະໂຍບາຍຍົກເວັ້ນວີຊາ ແລະ ເປັນອີກໜຶ່ງຈຸດໝາຍປາຍທາງຂອງພາກພື້ນອາຊີຕາເວັນອອກສຽງໃຕ້.

❖ **ກຸ່ມນັກທ່ອງທ່ຽວອາຊຽນ**

ກຸ່ມນັກທ່ອງທ່ຽວອາຊຽນໃນປີ 2024 ມີຈຳນວນ 2,366,200 ເທື່ອຄົນ ເຫັນວ່າເພີ່ມຂຶ້ນ 6% ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ມີອັດຕາສ່ວນແບ່ງຕະຫຼາດ 57.42% ຂອງນັກທ່ອງທ່ຽວທັງຫມົດ, ກຸ່ມນັກທ່ອງທ່ຽວອາຊຽນສ່ວນໃຫຍ່ແມ່ນນັກທ່ອງທ່ຽວຊາຍແດນທີ່ມີຊາຍແດນຕິດຈອດກັບ ສປປ ລາວ ເຊັ່ນ: ໄທ, ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ ແລະ ມຽນມາ, ບາງປະເທດກໍ່ມີສາຍການບິນລະຫວ່າງປະເທດ, ມີເສັ້ນທາງລົດໄຟລາວ-ຈີນ, ການເດີນທາງທີ່ສະດວກ-ວ່ອງໄວ, ມີທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ທີ່ຈຸດໝາຍປາຍທາງການທ່ອງ ທ່ຽວທີ່ມີຊື່ສຽງ ແລະ ຈຸດໝາຍປາຍທາງທີ່ເກີດຂຶ້ນໃຫມ່ ສປປ ລາວ ເຊັ່ນ: ເມືອງເຟືອງ ທີ່ໄດ້ຮັບຄວາມນິຍົມໃນສື່ໂຊຊ້ຽວຕ່າງໆ ເຮັດໃຫ້ນັກທ່ອງທ່ຽວມີຄວາມສົນໃຈໃນການ ຢາກເຂົ້າມາສຳພັດທຳມະຊາດ ແລະ ວິຖີຊີວິດ-ວັດທະນະທຳຂອງປະຊາຊົນທ້ອງຖິ່ນ.

❖ **ກຸ່ມນັກທ່ອງທ່ຽວອາຊີ ແລະ ປາຊີຟິກ**

ກຸ່ມນັກທ່ອງທ່ຽວຈາກອາຊີ ແລະ ປາຊີຟິກ ທີ່ເຂົ້າມາທ່ອງທ່ຽວ ສປປ ລາວ ມີຈຳນວນທັງໝົດ 1,370,403 ເທື່ອຄົນ, ເຫັນວ່າເພີ່ມຂຶ້ນ 55% ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ມີອັດຕາສ່ວນແບ່ງຕະຫຼາດ 33.26% ຂອງນັກທ່ອງທ່ຽວທັງຫມົດ ,ໃນນັ້ນມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວຫຼາຍກວ່າໝູ່ແມ່ນນັກທ່ອງທ່ຽວມາຈາກປະເທດ ສປ ຈີນມີຈຳນວນ 1,048,034 ເທື່ອຄົນ , ເກົາຫຼີ 232,895 ເທື່ອຄົນ, ຍີ່ປຸ່ນ 28,966 ເທື່ອຄົນ, ອົດສະຕຣາລີ 20,699 ເທື່ອຄົນ ແລະ ອິນເດຍ 14,542 ເທື່ອຄົນ, ສາເຫດທີ່ເຮັດໃຫ້ນັກທ່ອງທ່ຽວກຸ່ມນີ້ເພີ່ມຂຶ້ນ ໂດຍສະເພາະແມ່ນນັກທ່ອງທ່ຽວ ສປ ຈີນຍ້ອນວ່າມີເປີດໃຫ້ບໍລິການທາງດ້ານລົດໄຟຄວາມໄວສູງລາວ-ຈີນ ທີ່ເປີດເສັ້ນທາງລະຫວ່າງວຽງຈັນ-ຄຸນໝິງ ແລະ ຄຸນໝິງ-ວຽງຈັນ, ນັກທ່ອງທ່ຽວສາມາດເດີນທາງໄປຍັງຈຸດໝາຍປາຍທາງບໍ່ວ່າຈະເປັນເມືອງ ວັງວຽງ ແຂວງ ວຽງຈັນ, ແຂວງຫຼວງພະບາງ ແລະ ແຂວງ ອື່ນໆ ທີ່ນອນຢູ່ຕາມເສັ້ນທາງລົດໄຟລາວ-ຈີນໄດ້ຢ່າງສະດວກສະບາຍ ແລະ ປະຢັດເວລາ ລວມເຖິງປີ 2024 ເປັນປີທ່ອງທ່ຽວລາວ, ມີນະໂຍບາຍຍົກເວັ້ນວິຊາ ແລະ ມີການໂຄສະນາການທ່ອງທ່ຽວສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວຫຼາຍຂຶ້ນ.

❖ **ກຸ່ມນັກທ່ອງທ່ຽວເອີຣົບ**

ກຸ່ມນັກທ່ອງທ່ຽວຈາກເອີລົບ ທີ່ເຂົ້າມາທ່ອງທ່ຽວ ສປປ ລາວ ມີຈຳນວນທັງໝົດ 249,938 ເທື່ອຄົນ, ເຫັນວ່າເພີ່ມຂຶ້ນ 24% ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ມີອັດຕາສ່ວນແບ່ງຕະຫຼາດ 6.07% ຂອງນັກທ່ອງທ່ຽວທັງຫມົດ, ໃນນັ້ນມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວຫຼາຍກ່ອນໝູ່ເປັນຕົ້ນແມ່ນນັກທ່ອງທ່ຽວຈາກປະເທດຝຣັ່ງ ມີຈຳນວນນັກທ່ອງທ່ຽວ 53,768 ເທື່ອຄົນ, ຣັດເຊຍ 47,936 ເທື່ອຄົນ, ອັງກິດ 38,709 ເທື່ອຄົນ, ເຢຍລະມັນ 25,519 ເທື່ອຄົນ ແລະ ໂຮນລັງ 11,907 ເທື່ອຄົນ, ສາເຫດທີ່ເຮັດໃຫ້ນັກທ່ອງທ່ຽວກຸ່ມນີ້ເພີ່ມຂຶ້ນຍ້ອນວ່າ ສປປ ລາວ ເປີດປີທ່ອງທ່ຽວລາວ 2024 ເຊິ່ງເຮັດໃຫ້ມີການໂຄສະນາການທ່ອງທ່ຽວທີ່ໜ້າສົນໃຈກໍ່ເປັນປັດໄຈໜຶ່ງ ໃນການດຶງດູດກະຕຸ້ນການທ່ອງທ່ຽວ ເຮັດໃຫ້ນັກທ່ອງທ່ຽວ ມີຄວາມສົນໃຈເຂົ້າມາທ່ອງທ່ຽວຫຼາຍຂຶ້ນກ່ອນເກົ່າ.

❖ **ກຸ່ມນັກທ່ອງທ່ຽວອາເມລິກາ**

ກຸ່ມນັກທ່ອງທ່ຽວຈາກອາເມລິກາ ທີ່ເຂົ້າມາທ່ອງທ່ຽວ ສປປ ລາວ ມີຈຳນວນທັງໝົດ 120,235 ເທື່ອຄົນ, ເຫັນວ່າເພີ່ມຂຶ້ນ 37% ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ມີອັດຕາສ່ວນແບ່ງຕະຫຼາດ 2.92% ຂອງນັກທ່ອງທ່ຽວທັງຫມົດ, ໃນນັ້ນມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວຫຼາຍກ່ອນໝູ່ເປັນຕົ້ນ ແມ່ນນັກທ່ອງທ່ຽວຈາກ ປະ ເທດສະຫະລັດອາເມລິກາມີຈຳນວນນັກທ່ອງທ່ຽວ 68,221 ເທື່ອຄົນ, ການາດາ 13,763 ເທື່ອຄົນ ແລະ ບາຊີວ 2,699 ເທື່ອຄົນ, ສາມາດສັງເກດໄດ້ວ່າກຸ່ມນັກທ່ອງທ່ຽວ ທີ່ມາຈາກທະວີບນີ້ ແມ່ນມີຄວາມສຳຄັນເຊັ່ນກັນຈາກ 10 ປະເທດທີ່ເຂົ້າມາຫຼາຍສຸດແມ່ນປະເທດອາເມລິກາ ກໍເປັນໜຶ່ງໃນປະເທດທີ່ຕິດອັນດັບ ເຊິ່ງນອນຢູ່ໃນ ອັນດັບທີ 5 ຂອງປະເທດທີ່ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວຫຼາຍທີ່ສຸດ ແລະ ມີອັດຕາສ່ວນແບ່ງຕະຫຼາດ 1.66% ຂອງນັກທ່ອງທ່ຽວທັງຫມົດ.

❖ **ກຸ່ມນັກທ່ອງທ່ຽວອາຟຣິກາ ແລະ ຕາເວັນອອກກາງ**

ກຸ່ມນັກທ່ອງທ່ຽວຈາກອາຟຣິກາ ແລະ ຕາເວັນອອກກາງ ມີຈຳນວນ 14,056 ເທື່ອຄົນ. ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ເຫັນວ່າມີອັດຕາສ່ວນເພີ່ມຂຶ້ນ 21% ແລະ ມີອັດຕາສ່ວນແບ່ງຕະຫຼາດ 0.34%. ນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວ ສປປ ລາວ ຫຼາຍກວ່າປະເທດອື່ນ ແມ່ນປະເທດອິດສະຣາແອນ 5,941 ເທື່ອຄົນ. ເມື່ອສົມທຽບໃນໄລຍະດຽວກັນ ຂອງປີ 2023, ເຫັນວ່າມີອັດຕາສ່ວນເພີ່ມຂຶ້ນ 48% ແລະ ມີອັດຕາສ່ວນແບ່ງຕະຫຼາດ 0.14%.

ເຖິງຢ່າງໃດກໍຕາມ, ເນື່ອງຈາກ ສປປ ລາວ ມີນັກທ່ອງທ່ຽວທີ່ມາຈາກຫຼາຍພາກພື້ນ ເຊິ່ງສະລັບກັນເຂົ້າມາຢ້ຽມຢາມໃນແຕ່ລະໄລຍະ. ຖ້າຫາກວິເຄາະການເຂົ້າມາຂອງນັກທ່ອງທ່ຽວເປັນໄຕມາດ ຫຼື ລາຍເດືອນ ຍ້ອນຫຼັງ ຈະເຫັນວ່າ ຈຳນວນຂອງນັກທ່ອງທ່ຽວໃນແຕ່ລະໄຕມາດ ມີຄວາມໃກ້ຄຽງກັນ, ໃນປີ 2024 ສັງເກດເຫັນວ່າ ໃນໄລຍະໄຕມາດທີ 1-4 ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນເລັກນ້ອຍ ຖ້າປຽບທຽບກັບປີ 2023. ສະແດງໃຫ້ເຫັນວ່າ ແນວໂນ້ມຂອງການທ່ອງທ່ຽວກຳລັງຟື້ນຕົວຢ່າງຕໍ່ເນື່ອງ.

# ຕາຕະລາງທີ 9: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແບ່ງຕາມແຕ່ລະສັນຊາດ (ອັດຕາເພີ່ມຂຶ້ນເປັນເປີເຊັນ) ແຕ່ປີ 2019-2024

| ປະເທດ / ປີ | 2019 | 2020 | 2021 | 2022 | 2023 | 2024 | %∆ 24/23 |
|---|---|---|---|---|---|---|---|
| **ລວມທັງໝົດ** | **4,791,065** | **886,447** | **-** | **1,294,365** | **3,417,629** | **4,120,832** | **21** |
| **ອາຊຽນ** | **3,198,829** | **555,519** | **-** | **1,124,376** | **2,231,593** | **2,366,200** | **6** |
| ບຣູນາຍ | 389 | 103 | - | 172 | 325 | 569 | 75 |
| ກໍາປູເຈຍ | 28,342 | 5,012 | - | 11,543 | 18,961 | 23,400 | 23 |
| ອິນໂດເນເຊຍ | 5,161 | 1,217 | - | 2,134 | 3,546 | 8,134 | 129 |
| ມາເລເຊຍ | 28,321 | 5,800 | - | 6,382 | 16,761 | 21,900 | 31 |
| ມຽນມາ | 22,524 | 1,417 | - | 2,348 | 7,068 | 19,879 | 181 |
| ຟີລິບປິນ | 17,187 | 3,679 | - | 4,986 | 12,886 | 13,948 | 8 |
| ສິງກະໂປ | 11,730 | 2,008 | - | 5,012 | 7,709 | 8,613 | 12 |
| ໄທ | 2,160,300 | 350,103 | - | 731,754 | 1,326,705 | 1,215,553 | -8 |
| ຫວຽດນາມ | 924,875 | 186,180 | - | 360,045 | 837,632 | 1,054,204 | 26 |
| **ອາຊີ ແລະ ປາຊີຟິກ** | **1,317,478** | **226,297** | **-** | **93,297** | **885,638** | **1,370,403** | **55** |
| ອົດສະຕຣາລີ | 24,750 | 7,271 | - | 6,501 | 20,158 | 20,699 | 3 |
| ບັງກະລາເທດ | | 176 | - | - | 1,730 | 1,002 | -42 |
| ຈີນ | 1,022,727 | 138,466 | - | 45,249 | 641,314 | 1,048,034 | 63 |
| ອິນເດຍ | 8,152 | 1,743 | - | 3,568 | 12,093 | 14,542 | 20 |
| ຍີ່ປຸ່ນ | 41,736 | 11,085 | - | 6,848 | 24,824 | 28,966 | 17 |
| ເກົາຫຼີໃຕ້ | 203,191 | 40,210 | - | 26,008 | 165,997 | 232,895 | 40 |
| ເນປານ | | 113 | - | 249 | 652 | 1,083 | 66 |
| ນິວຊີແລນ | 3,965 | 1,226 | - | 1,184 | 3,485 | 3,778 | 8 |
| ປາກີສະຖານ | | 173 | - | - | 565 | 833 | 47 |
| ສີລັງກາ | | 157 | - | - | 563 | 773 | 37 |
| ໄຕ້ຫວັນ | 6,956 | 1,714 | - | 945 | 5,140 | 7,884 | 53 |
| ອື່ນໆ | 6,001 | 23,963 | - | 2,745 | 9,117 | 9,914 | 9 |
| **ເອີຣົບ** | **182,463** | **70,459** | **-** | **46,729** | **200,858** | **249,938** | **24** |
| ໂອຕຼິດ | 3,320 | 1,250 | - | 568 | 2,489 | 3,220 | 29 |
| ແບນຊິກ | 6,099 | 1,970 | - | 1,492 | 4,461 | 4,150 | -7 |
| ເດນມາກ | 3,134 | 1,591 | - | 985 | 3,208 | 3,876 | 21 |
| ແຟງລັງ | 1,719 | 780 | - | 454 | 1,206 | 1,564 | 30 |
| ຝຣັ່ງ | 44,416 | 15,509 | - | 10,355 | 40,666 | 53,768 | 32 |
| ເຢຍລະມັນ | 25,346 | 8,632 | - | 6,077 | 18,436 | 25,519 | 38 |
| ເກຼັກ | 586 | 246 | - | 128 | 500 | 612 | 22 |
| ໄອແລນ | | 762 | - | - | 3,505 | 2,825 | -19 |
| ອີຕາລີ | 7,330 | 2,751 | - | 1,320 | 5,862 | 8,195 | 40 |
| ໂຮນລັງ | 8,877 | 2,287 | - | 2,564 | 9,703 | 11,907 | 23 |
| ນອກແວ | 2,248 | 874 | - | 500 | 1,948 | 2,105 | 8 |
| ໂປແລນ | | 1,146 | - | - | 2,893 | 4,618 | 60 |
| ໂປຕຸເກດ | | 705 | - | - | 1,783 | 2,331 | 31 |
| ຣັດເຊຍ | 12,054 | 3,144 | - | 4,410 | 44,345 | 47,936 | 8 |
| ແອດສະປາຍ | 6,157 | 1,476 | - | 1,416 | 4,842 | 5,719 | 18 |
| ຊູແອັດ | 3,475 | 1,419 | - | - | 2,893 | 3,803 | 31 |
| ສະວິດສະແລນ | 8,512 | 2,921 | - | 1,537 | 8,348 | 8,853 | 6 |
| ອັງກິດ | 31,976 | 11,592 | - | 8,664 | 32,946 | 38,709 | 17 |
| **ອື່ນໆ** | 17,214 | 11,404 | - | 6,259 | 10,826 | 20,228 | 87 |
| **ອາເມລິກາ** | **82,652** | **30,176** | **-** | **25,440** | **87,912** | **120,235** | **37** |
| ອາເຈນຕິນາ | 933 | 398 | - | - | 486 | 793 | 63 |
| ບາຊິວ | 2,915 | 1,460 | - | - | 1,878 | 2,699 | 44 |
| ການາດາ | 12,873 | 4,638 | - | 2,974 | 11,899 | 13,763 | 16 |
| ສະຫະລັດອາເມລິກາ | 61,184 | 18,116 | - | 18,447 | 62,660 | 68,221 | 9 |
| **ອື່ນໆ** | 4,747 | 5,564 | - | 4,019 | 10,989 | 34,759 | 216 |
| **ອາຟຣິກາ ແລະ ຕາເວັນອອກກາງ** | **9,641** | **3,996** | **-** | **4,523** | **11,628** | **14,056** | **21** |
| ອີຢິບ | 241 | 53 | - | - | 147 | 244 | 66 |
| ຄູເວດ | 178 | 21 | - | - | 361 | 83 | -77 |
| ອິດສະຣາແອນ | 4,041 | 1,664 | - | 1,170 | 4,005 | 5,941 | 48 |
| ຊາອຸດີ ອາລາເບຍ | 105 | 28 | - | - | 347 | 451 | 30 |
| ອາຟຣິກາໄຕ້ | 2,303 | 594 | - | - | 1,238 | 1,278 | 3 |
| ສະຫະລັດອາລັບເອມີເລດ | 64 | 3 | - | - | 64 | 136 | 113 |
| **ອື່ນໆ** | 2,709 | 1,633 | - | 3,353 | 5,466 | 5,923 | 8 |

# ຕາຕະລາງທີ 10: ນັກທ່ອງທ່ຽວແບ່ງຕາມແຕ່ລະສັນຊາດ (ອັດຕາສ່ວນແບ່ງຕະຫຼາດ) ແຕ່ປີ 2019-2024

| ປະເທດ / ປີ | 2019 | | 2020 | | 2021 | 2022 | | 2023 | | 2024 | |
|---|---|---|---|---|---|---|---|---|---|---|---|
| **ລວມທັງໝົດ** | **4,791,065** | **100%** | **886,447** | **100%** | **-** | **1,294,365** | **100%** | **3,417,629** | **100%** | **4,120,832** | **100%** |
| **ອາຊຽນ** | **3,198,829** | **66.77** | **555,519** | **62.67** | **-** | **1,124,376** | **86.87** | **2,231,593** | **65.30** | **2,366,200** | **57.42** |
| ບຣູນາຍ | 389 | 0.01 | 103 | 0.01 | - | 172 | 0.01 | 325 | 0.01 | 569 | **0.01** |
| ກຳປູເຈຍ | 28,342 | 0.59 | 5,012 | 0.57 | - | 11,543 | 0.89 | 18,961 | 0.55 | 23,400 | **0.57** |
| ອິນໂດເນເຊຍ | 5,161 | 0.11 | 1,217 | 0.14 | - | 2,134 | 0.16 | 3,546 | 0.10 | 8,134 | **0.20** |
| ມາເລເຊຍ | 28,321 | 0.59 | 5,800 | 0.65 | - | 6,382 | 0.49 | 16,761 | 0.49 | 21,900 | **0.53** |
| ມຽນມາ | 22,524 | 0.47 | 1,417 | 0.16 | - | 2,348 | 0.18 | 7,068 | 0.21 | 19,879 | **0.48** |
| ຟີລິບປິນ | 17,187 | 0.36 | 3,679 | 0.42 | - | 4,986 | 0.39 | 12,886 | 0.38 | 13,948 | **0.34** |
| ສິງກະໂປ | 11,730 | 0.24 | 2,008 | 0.23 | - | 5,012 | 0.39 | 7,709 | 0.23 | 8,613 | **0.21** |
| ໄທ | 2,160,300 | 45.09 | 350,103 | 39.50 | - | 731,754 | 56.53 | 1,326,705 | 38.82 | 1,215,553 | **29.50** |
| ຫວຽດນາມ | 924,875 | 19.30 | 186,180 | 21.00 | - | 360,045 | 27.82 | 837,632 | 24.51 | 1,054,204 | **25.58** |
| **ອາຊີ ແລະ ປາຊີຟິກ** | **1,317,478** | **27.50** | **226,297** | **25.53** | **-** | **93,297** | **7.21** | **885,638** | **25.91** | **1,370,403** | **33.26** |
| ອົດສະຕຣາລີ | 24,750 | 0.52 | 7,271 | 0.82 | - | 6,501 | 0.50 | 20,158 | 0.59 | 20,699 | **0.50** |
| ບັງກະລາເທດ | | - | 176 | 0.02 | - | - | - | 1,730 | 0.05 | 1,002 | **0.02** |
| ຈີນ | 1,022,727 | 21.35 | 138,466 | 15.62 | - | 45,249 | 3.50 | 641,314 | 18.76 | 1,048,034 | **25.43** |
| ອິນເດຍ | 8,152 | 0.17 | 1,743 | 0.20 | - | 3,568 | 0.28 | 12,093 | 0.35 | 14,542 | **0.35** |
| ຍີ່ປຸ່ນ | 41,736 | 0.87 | 11,085 | 1.25 | - | 6,848 | 0.53 | 24,824 | 0.73 | 28,966 | **0.70** |
| ເກົາຫຼີໃຕ້ | 203,191 | 4.24 | 40,210 | 4.54 | - | 26,008 | 2.01 | 165,997 | 4.86 | 232,895 | **5.65** |
| ເນປານ | | - | 113 | 0.01 | - | 249 | 0.02 | 652 | 0.02 | 1,083 | **0.03** |
| ນິວຊີແລນ | 3,965 | 0.08 | 1,226 | 0.14 | - | 1,184 | 0.09 | 3,485 | 0.10 | 3,778 | **0.09** |
| ປາກີສະຖານ | | - | 173 | 0.02 | - | - | - | 565 | 0.02 | 833 | **0.02** |
| ສີລັງກາ | | - | 157 | 0.02 | - | - | - | 563 | 0.02 | 773 | **0.02** |
| ໄຕ້ຫວັນ | 6,956 | 0.15 | 1,714 | 0.19 | - | 945 | 0.07 | 5,140 | 0.15 | 7,884 | **0.19** |
| ອື່ນໆ | 6,001 | 0.13 | 23,963 | 2.70 | - | 2,745 | 0.21 | 9,117 | 0.27 | 9,914 | **0.24** |
| **ເອີຣົບ** | **182,463** | **3.81** | **70,459** | **7.95** | **-** | **46,729** | **3.61** | **200,858** | **5.88** | **249,938** | **6.07** |
| ໂອຕຼິດ | 3,320 | 0.07 | 1,250 | 0.14 | - | 568 | 0.04 | 2,489 | 0.07 | 3,220 | **0.08** |
| ແບນຊິກ | 6,099 | 0.13 | 1,970 | 0.22 | - | 1,492 | 0.12 | 4,461 | 0.13 | 4,150 | **0.10** |
| ເດນມາກ | 3,134 | 0.07 | 1,591 | 0.18 | - | 985 | 0.08 | 3,208 | 0.09 | 3,876 | **0.09** |
| ແຟງລັງ | 1,719 | 0.04 | 780 | 0.09 | - | 454 | 0.04 | 1,206 | 0.04 | 1,564 | **0.04** |
| ຝຣັ່ງ | 44,416 | 0.93 | 15,509 | 1.75 | - | 10,355 | 0.80 | 40,666 | 1.19 | 53,768 | **1.30** |
| ເຢຍລະມັນ | 25,346 | 0.53 | 8,632 | 0.97 | - | 6,077 | 0.47 | 18,436 | 0.54 | 25,519 | **0.62** |
| ເກຼັກ | 586 | 0.01 | 246 | 0.03 | - | 128 | 0.01 | 500 | 0.01 | 612 | **0.01** |
| ໄອແລນ | | - | 762 | 0.09 | - | - | - | 3,505 | 0.10 | 2,825 | **0.07** |
| ອີຕາລີ | 7,330 | 0.15 | 2,751 | 0.31 | - | 1,320 | 0.10 | 5,862 | 0.17 | 8,195 | **0.20** |
| ໂຮນລັງ | 8,877 | 0.19 | 2,287 | 0.26 | - | 2,564 | 0.20 | 9,703 | 0.28 | 11,907 | **0.29** |
| ນອກແວ | 2,248 | 0.05 | 874 | 0.10 | - | 500 | 0.04 | 1,948 | 0.06 | 2,105 | **0.05** |
| ໂປແລນ | | - | 1,146 | 0.13 | - | - | - | 2,893 | 0.08 | 4,618 | **0.11** |
| ໂປຕຸເກດ | | - | 705 | 0.08 | - | - | - | 1,783 | 0.05 | 2,331 | **0.06** |
| ຣັດເຊຍ | 12,054 | 0.25 | 3,144 | 0.35 | - | 4,410 | 0.34 | 44,345 | 1.30 | 47,936 | **1.16** |
| ແອດສະປາຍ | 6,157 | 0.13 | 1,476 | 0.17 | - | 1,416 | 0.11 | 4,842 | 0.14 | 5,719 | **0.14** |
| ຊູແອັດ | 3,475 | 0.07 | 1,419 | 0.16 | - | - | - | 2,893 | 0.08 | 3,803 | **0.09** |
| ສະວິດສະແລນ | 8,512 | 0.18 | 2,921 | 0.33 | - | 1,537 | 0.12 | 8,348 | 0.24 | 8,853 | **0.21** |
| ອັງກິດ | 31,976 | 0.67 | 11,592 | 1.31 | - | 8,664 | 0.67 | 32,946 | 0.96 | 38,709 | **0.94** |
| ອື່ນໆ | 17,214 | 0.36 | 11,404 | 1.29 | - | 6,259 | 0.48 | 10,826 | 0.32 | 20,228 | **0.49** |
| **ອາເມລິກາ** | **82,652** | **1.73** | **30,176** | **3.40** | **-** | **25,440** | **1.97** | **87,912** | **2.57** | **120,235** | **2.92** |
| ອາເຈນຕິນາ | 933 | 0.02 | 398 | 0.04 | - | - | - | 486 | 0.01 | 793 | **0.02** |
| ບາຊີວ | 2,915 | 0.06 | 1,460 | 0.16 | - | - | - | 1,878 | 0.05 | 2,699 | **0.07** |
| ການາດາ | 12,873 | 0.27 | 4,638 | 0.52 | - | 2,974 | 0.23 | 11,899 | 0.35 | 13,763 | **0.33** |
| ສະຫະລັດອາເມລິກາ | 61,184 | 1.28 | 18,116 | 2.04 | - | 18,447 | 1.43 | 62,660 | 1.83 | 68,221 | **1.66** |
| ອື່ນໆ | 4,747 | 0.10 | 5,564 | 0.63 | - | 4,019 | 0.31 | 10,989 | 0.32 | 34,759 | **0.84** |
| **ອາຟຣິກາ ແລະ ຕາເວັນອອກກາງ** | **9,641** | **0.20** | **3,996** | **0.45** | **-** | **4,523** | **0.35** | **11,628** | **0.34** | **14,056** | **0.34** |
| ອີຢີບ | 241 | 0.01 | 53 | 0.01 | - | - | - | 147 | 0.00 | 244 | **0.01** |
| ຄູເວດ | 178 | 0.00 | 21 | 0.00 | - | - | - | 361 | 0.01 | 83 | **0.00** |
| ອິດສະຣາແອນ | 4,041 | 0.08 | 1,664 | 0.19 | - | 1,170 | 0.09 | 4,005 | 0.12 | 5,941 | **0.14** |
| ຊາອຸດີ ອາລາເບຍ | 105 | 0.00 | 28 | 0.00 | - | - | - | 347 | 0.01 | 451 | **0.01** |
| ອາຟຣິກາໃຕ້ | 2,303 | 0.05 | 594 | 0.07 | - | - | - | 1,238 | 0.04 | 1,278 | **0.03** |
| ສະຫະລັດອາລັບເອມີເລດ | 64 | 0.00 | 3 | 0.00 | - | - | - | 64 | 0.00 | 136 | **0.00** |
| ອື່ນໆ | 2,709 | 0.06 | 1,633 | 0.18 | - | 3,353 | 0.26 | 5,466 | 0.16 | 5,923 | **0.14** |

# ຕາຕະລາງທີ 11: ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມ ສປປ ລາວ ແຕ່ລະເດືອນ ໃນປີ 2024

| ປະເທດ | ເດືອນ | | | | | | | | | | | | ລວມທັງໝົດ |
|---|---|---|---|---|---|---|---|---|---|---|---|---|---|
| | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | |
| **ລວມທັງໝົດ** | **377,628** | **367,278** | **386,996** | **388,714** | **319,410** | **267,567** | **215,378** | **329,996** | **283,600** | **376,011** | **443,222** | **365,032** | **4,120,832** |
| **ອາຊຽນ** | **209128** | **200028** | **222421** | **228936** | **187297** | **185149** | **144299** | **203324** | **161899** | **220409** | **223021** | **180289** | **2,366,200** |
| ບຣູໄນ | 35 | 45 | 26 | 28 | 35 | 5 | 12 | 78 | 55 | 132 | 85 | 33 | **569** |
| ກໍາປູເຈຍ | 998 | 2394 | 2166 | 1590 | 2307 | 1565 | 1572 | 1418 | 1532 | 2106 | 3155 | 2597 | **23,400** |
| ອິນໂດເນເຊຍ | 502 | 445 | 264 | 990 | 481 | 319 | 414 | 679 | 857 | 859 | 1150 | 1174 | **8,134** |
| ມາເລເຊຍ | 1990 | 1530 | 1552 | 1696 | 1426 | 1516 | 1046 | 1897 | 1807 | 2010 | 2589 | 2841 | **21,900** |
| ມຽນມາ | 736 | 1184 | 1348 | 1656 | 1498 | 1851 | 2105 | 2068 | 2000 | 1629 | 2002 | 1802 | **19,879** |
| ຟີລິບປິນ | 1354 | 918 | 892 | 893 | 959 | 892 | 1055 | 1394 | 1164 | 1316 | 1788 | 1323 | **13,948** |
| ສິງກະໂປ | 950 | 677 | 811 | 715 | 746 | 324 | 196 | 712 | 686 | 909 | 951 | 936 | **8,613** |
| ໄທ | 114151 | 121940 | 111504 | 119239 | 104223 | 109096 | 58860 | 116215 | 89537 | 90675 | 103058 | 77055 | **1,215,553** |
| ຫວຽດນາມ | 88412 | 70895 | 103858 | 102129 | 75622 | 69581 | 79039 | 78863 | 64261 | 120773 | 108243 | 92528 | **1,054,204** |
| **ອາຊີ ແລະ ປາຊີຟິກ** | **126673** | **124130** | **124434** | **129128** | **112493** | **71209** | **58636** | **98619** | **97475** | **131706** | **172535** | **123365** | **1,370,403** |
| ອົດສະຕຣາລີ | 2102 | 2504 | 1750 | 1729 | 1300 | 639 | 893 | 1498 | 722 | 1893 | 2884 | 2785 | **20,699** |
| ບັງກະລາເທດ | 135 | 135 | 71 | 49 | 106 | 70 | 38 | 97 | 70 | 68 | 79 | 84 | **1,002** |
| ຈີນ | 76215 | 78288 | 87901 | 109015 | 92225 | 66439 | 53097 | 75800 | 76589 | 105530 | 140143 | 86792 | **1,048,034** |
| ອິນເດຍ | 1432 | 1319 | 1314 | 800 | 1019 | 738 | 629 | 1271 | 1334 | 1612 | 2052 | 1022 | **14,542** |
| ຍີ່ປຸ່ນ | 3404 | 3056 | 2921 | 2174 | 1974 | 811 | 832 | 2780 | 2552 | 2628 | 2448 | 3386 | **28,966** |
